# ໂອນ່ !
# ນ້ອງສາວເອີຍ



ຮິບໂຮມໂດຍ

ດຣ. ສົມພະວັນ ອິນທະວົງສ໌

ດຣ. ສົມພະວັນ ອິນທະວົງສ໌

# ໂອບໍນ້ອງສາວເອີຍ !

*ຕັດຍອນຣິບໂຣມມາຈາກກະວີນິພົນເອກ*

*ໃນວັນນະຄະດີລາວ*

*ແລະກອນລຳລາວ*

ພິມຄັ້ງທີ່ນຶ່ງ ປີ ໑໙໗໘

ຈຳນວນ ໑໕໐໐ ສະບັບ

*ຂໍມອບໜັງສືນີ້*

ແດ່ຍຸວະຊົນລາວທຸກເຜົ່າແລະທຸກຊົນຊັ້ນ ອັນຈະ

ເປັນອະນາຄົດ ແລະພລັງຂອງຊາດລາວຕໍ່ໄປ....

*ດ້ວຍຄວາມຮັກແພງ*

*ແລະປາຖນາດີ*

# ຄຳນຳ

ໃນໜັງສືເຫລັ້ມນີ້ ສ່ວນມາກແມ່ຜົລການຮິບໂຮມແລະຕັດຍອນເນື້ອຄຳຈາກໜັງສືຕ່າງ ໆ ຂອງວັນນະຄະດີລາວ. ສຳນວນຄຳເວົ້າຊຶ່ງນັກຂຽນລາວບູຮານໄດ້ຂຽນໄວ້ເປັນກາບກອນນັ້ນ ລ້ວນແລ້ວແຕ່ເປັນສຳນວນໂກ້ ໆ ມ່ວນຫູອອນຊອນແລະຈັບໃຈ.

ຂ້າພະເຈົ້າບໍ່ໄດ້ເອົາໜັງສືສັງສິນໄຊ ຊຶ່ງເປັນວັນນະຄະດີລາວຊັ້ນປະເສີດນັ້ນມາສເນີໃນໜັງສືເຫລັ້ມນີ້. ອາດເປັນການຂາດຕົກບົກພ່ອງອັນນຶ່ງ.

ແຕ່ຂ້າພະເຈົ້າຫວັງວ່າກາບກອນຕ່າງ ໆ ທີ່ຂ້າພະເຈົ້າໄດ້ເລືອກເອົາມາສເນີແນະໃນທີ່ນີ້ ຄົງພໍຈະໃຫ້ຜູ້ອ່ານໄດ້ເຫັນເຖິງຄວາມສຳຄັນ ແລະ ຄວາມງອກງາມຂອງພາສາຊາດລາວນັ້ນພໍສົມຄວນ, ນອກຈາກຈະນຳຄວາມມ່ວນຊື່ນມາສູ່ທ່ານຜູ້ອ່ານອີກດ້ວຍ.

*ຜູ້ຮິບໂຮມ*

ວຽງຈັນ ໑໙໗໘.

# ສາຣະບານ


| | | ໜ້າ |
|---|---|---|
| □ | ໂອນ້ອງສາວເອີຍ | 2 |
| □ | ລົມສເລົາແກ້ວ | 6 |
| □ | ສາມຖຸແລງຄຳຮັກ | 7 |
| □ | ນາຍພານເນື້ອ | 9 |
| □ | ສາມອຳນາງ | 12 |
| □ | ທ້າວສິທົນແລະນາງມະໂນຣາ | 16 |
| □ | ສາມລຶພສູນ | 21 |
| □ | ຄຳສຸກອັນຍິ່ງໃຫຍ່ | 51 |
| □ | ຍິງຜູ່ມີໂສກ | 54 |
| □ | ກອນລຳກ້ຽວ | 59 |
| □ | ກອນລຳສາດ | 61 |

- ອັສຈັນ ອັສຈ້ອຍ 68
- ທ້າວຄຳສອນ 71
- ສາມຊາຍຫາຍິງ 100
- ສາມຍິງຕອບຊາຍ 103
- ພໍ່ງເຢີ ! 106
- ທ້າວກາລະເກດໄປຫລົ້ມນາງມະລິຈັນ 112
- ເວົ້າເຖິງເຣື່ອງກະວິນິພົນ 129






# *ບັ້ນນຶ່ງ ໃນນິທານນົກຈອກ*

ຫລັງຈາກທ້າວອໍຣະຈິດກັບນາງຈັນທະຈອນ ໄດ້ເປັ້ນຜົວເມັຽກັນແລ້ວ, ທ້າວອໍຣະຈິດໄດ້ພາທິດາພຍາແຫ່ງເມືອງສີລາຊຶ່ງຊາດກ່ອນເຄີຍເປັ້ນນົກຈອກຄູ່ຜົວເມັຽດ້ວຍກັນນັ້ນ ເມືອຍາມພໍ່ແມ່ຂອງທ້າວທີ່ເມືອງກາສີ.

ເມື່ອຂບວນແຫ່ ທ້າວກັບນາງນັ້ນເຂົ້າຂອບແດນເມືອງກາສີ ອັນເປັ່ນເມືອງພໍ່ແມ່ຂອງທ້າວ ພວກປະຊາຊົນເມືອງກາສີກໍພາກັນຫລັ່ງໄຫລມາເບິ່ງ ອົງມົງກຸດຣາຊກຸມານ ຊຶ່ງໄດ້ເມັຽມາພ້ອມກັບນິຄົມເມືອງສີລາແຫ່ແຫນມາຈຳນວນມາກ ອ້າຍບ່າວເມືອງສີລາໃນຂບວນແຫ່ກໍພາກັນຮ້ອງຢອກເຢີຍຜູ້ສາວເມືອງກາສີ ຕາມນິສັຍອັນດີງາມຂອງຊົນຊາດລາວ ຊຶ່ງມີຢູ່ແຕ່ດຶກດຳບັນ ເຖິງສມັຍນີ້.



# ໂອນໍ້ນ້ອງສາວເອີຍ

ອ້າຍບ່າວ (ເມືອງສີລາ) :

ໂອນໍ ນ້ອງສາວເອີຍ !

ອ້າຍກໍມາພໍ້ມ້າ

ໃສ່ສ່ອງໃນສະພັງ

ສົມກະໃຈຮຽມ

ອ່າຢາກລົງລອຍຫລິ້ນ

ພໍໄດ້ມີແຮງຍ້ອມ

ຫາຍແດອນຈຶໄດ້ບໍ ?

ລືອ່າສະໃພ້ມີແຕ່ແຂ້

ງຮ້າຍຢູ່ຫວງ ນັ້ນເດ ?

ຜູ້ສາວ (ເມືອງກາສີ) :

ໂອນໍ ອ້າຍເອີຍ !

ອັນວ່າ ສະວັງມ້າ

ກາລິ ແສນອຸ່ນ

ມັນບ່ສົມທີ່ອ້າຍ

ສະກຸມກອ້າງຍ່າຈາ ມັ້ນທ້ອນ

ຖ້າອ່າ ອ້າຍບ່ເຫັນແກ່ຮ້າຍ

ກ້າຜ່າຍກາລິ ດັ້ງມັ້ນ

ກໍ່ມີແນວທອງ

ເງິນກອງ ໃນຫັ້ນ

ອັນອ່າສະອັງມ້າ

ຕາມໃຈເຈົ້າຈິອາບ ເອົາທ້ອນ

ອ້າຍຢາກຝູມຍັ້ງມື້

ໃຜຈິຫ້າມແຫ່ງອອນ ມັ້ນເດ.



## *ບັ້ນນຶ່ງ ໃນນິທານທ້າວສິທົນ*

ນາງມະໂນຣາ ເມັຽທ້າວສິທົນ ເປັນເຊື້ອຊາດກິນນະຣີ ມີປີກສາມາດເຫາະເຫີນເດີນອາກາດໄດ້ ຕອນນຶ່ງທ້າວສິທົນໄປຜາບຜູ້ຮ້າຍຊາຍໂຈນທາງຂອບເມືອງບ່ອຍເມັຽໄວ້ໃນເມືອງພໍ່ຕົນຊຶ່ງເປັນກະສັດເມືອງເປັງຈານ ຜົ່ນຮ້າຍ ໝໍໂຫນ ແລະນັກພອກເລີຍ ເກັ້ຽກ່ອມພະອົງໄດ້ວ່າ ຄວນເອົານາງມະໂນຣາໄປຂ້າສາ ຫາກບໍ່ຢາກໃຫ້ບ້ານເມືອງພິນາດດັ່ງປາກົດຢູ່ໃນຄຳຝັ້ນພຍາມັ້ນ ນາງມະໂນຣາຮູ້ຄວາມລັບກ່ຽວເຣື່ອງຕົນນີ້ກ່ອນຈຶ່ງຂໍປີກຕົນນຳແມ່ເຖົ້າ ແລ້ວບິນກັບຄືນເມືອເມືອງພູເງິນ ອັນເປັນບ້ານເກີດເມືອງນອນຂອງຕົນ. ພຍາເມືອງພູເງິນອັນເປັນພໍ່ຂອງນາງມະໂນຣາ ພຣະອົງມີຊື່ວ່າພຍາໄກຣາດ ເມື່ອທ້າວສິທົນກັບຈາກຂອບເມືອງມາບໍ່ພໍ້ເມັຽກໍ່ຈຶ່ງຕິດຕາມຫາ ດັ້ນດົງພົງໄພໄປ (ກອນບົດນີ້ຢູ່ບັ້ນນີ້)

ເມື່ອໄປເຖິງເມືອງພູເງິນແລ້ວ ທ້າວກໍບໍ່ເຮັດໃຫ້ຜູ້ໃດ

ຮູ້ຈັກທ້າວລັກເອົາແຫວນນາງມະໂນຣາທີ່ຣືສີໃຫ້ຕົນມານັ້ນຖິ້ມລົງໃນຄຸນ້ຳ ສາວສນົມກົມມະວັງຂອງນາງມະໂນຣາໄວ້ ເວລານາງອາບນ້ຳນາງມະໂນຣາຈຶ່ງຮູ້ວ່າຜົວຕົນມາຮອດໃນເມືອງຕົນແລ້ວ ຈຶ່ງຂຽນໜັງສື (ສານ) ຖແລງຄຳຮັກຂອງນາງໃສ່ຜ້າແພ ແລ້ວຮ່ໃຫ້ຄົນໃຊ້ໄປສົ່ງໃຫ້ທ້າວໂດຍດ່ວນ.

## *ສົມສເລົາແກ້ວມະໂນຣານ້ອງພີ່*

ໂອນໍ ສົມສເລົາແກ້ວ
        ມະໂນຣານ້ອງພີ່ ອອນເອີຍ
ເຈົ້າຍັງຄິດຈອດພົ້ນ
        ແຝງຊ້ອນດັ້ງພີ່ຊາຍ ບໍ່ເດ
ພີ່ກໍຄິດຮອດນ້ອງ
        ນ້ຳພຣະເນດນອງໄຫລ
ທຸກແຕ່ໄກເມືອງມາ
        ພາກພຣະນາງ ນອນແລ້ງ



## *ສານຖແລງຄຳຮັກຂອງນາງມະໂນຣາ ເຖິງທ້າວສີທົນ*

ໂອມໍ ສາມີ ມັບແຕ່ພາກພີ່ເຈົ້າ

ຊິເບົາໃຈນ້ອຍນຶ່ງ ບ່ມີແລ້ວ !

ມື້ນຶ່ງເຈັບມື້ນຶ່ງໄຂ້

ມື້ນຶ່ງໄຫ້ຫາອ້າຍຢູ່ຮ່ອມຮົມ

ພໍແຕ່ເຫັນຄົນໃຊ້

ໄຂຄະດິກອຍກ່າວ

ຈິດລ່າວລົ້ມ

ເລີຍສມ້ອຍເມື່ອຍລົງ



## ບັນນຶ່ງ ໃນນິທານທ້າວສີທົນ

ບັນກ່ອນນາຍພານເນື້ອ ຈະໄປພົບນາງເທພກິນນະຣີ ທັງເຈັດແລະນາງມະໂນຣາລອຍຫລິ້ນນ້ຳສະພັງກາງປ່າ ນາຍພານຜູ້ນີ້ໄດ້ທຳຄຸນໄວ້ກັບພຍານາກ ເມື່ອໄປພົບນາງກິນນະຣີ ລາວຈຶ່ງຢາກໄດ້ ຣືສີອົງນຶ່ງແນະນຳໃຫ້ລາວໄປຂໍເອົາບ້ວງບາດນ້ຳພຍານາກ ມາຄ້ອງເອົານາງກິນນະຣີ ຈຶ່ງຈະຄ້ອງເອົາໄດ້ ພຍານາກບໍ່ລືມຄຸນ ຈຶ່ງເອົາໃຫ້

ທີ່ຈິງແລ້ວ ນາຍພານຜູ້ນີ້ເປັນຄົນຮັກລູກຮັກເມັຽຮັກ ຄອບຄົວ ດັ່ງຈະເຫັນໄດ້ຈາກກອນ "ນາຍພານເຖົ້າຄິດຮອດເມັຽ" ນີ້ ເພາະກ່ອນທີ່ຈະໄປຫລົງໄຫລຢາກໄດ້ນາງມະໂນຣານັ້ນ ນາຍພານເຖົ້າກໍຮ່ຳຄະນຶງເຖິງເມັຽຕົນຢູ່.

ເມື່ອຄ້ອງມັດເອົານາງໄດ້ດ້ວຍ ບ້ວງພະຍານາກແລ້ວ ກໍຍັງມີສະມາທິພຽງພໍທີ່ຈະບໍ່ແຕະເນື້ອຕ້ອງກາຍນາງມະໂນຣາ ແລະ ໄດ້ເອົາຂຶ້ນເມືອຖວາຍທ້າວສີທົນ ດ້ວຍຄວາມຈົງຮັກພັກດີ ນາຍພານຜູ້ນີ້ຈຶ່ງນັບວ່າເປັນຜູ້ມີກຸສົນບໍ່ນ້ອຍ ຈຶ່ງໄດ້ເປັນຄົນຮັ່ງມີເປັນດີ ຫລັງຈາກນັ້ນມາ.

# ນາຍພານເນື້ອ ຄຶດຮອດເມັຽ

ໂອນໍ ປານນີ້ເມັຽຂວັນຂ້ອຍ

ຊິຄອຍທາງຫລິງລ່ຳແລນໍ່

ຄ່ຳມືດມ້ອຍ

ນາງນ້ອຍຊິຢູ່ໃສ

ຍາມເຂົ້າບ່ອນ

ໃຜຊິເປັນເພື່ອນຈາ

ຍາມແລງມາ ໃຜຊິເປັນຜູ້ເວົ້າ

ນຳເຈົ້າດັ່ງພີ່ຊາຍ

ໃຜຊິບາຍຂະຂົນນ້ອຍ

ຍາມເປັນປາງບ່ອຍ

ໃຜຊິຊ່ອຍອຸ້ມ

ເອົາເຈົ້າເຂົ້າບ່ອນນອນ ນ້ອງເອີຍ

ຄິດເມື່ອຮຽມຮຽງຊ້ອນ

ຊົມນາງນອນຜ່າງ

ພີ່ຍັງພີຜ້າຕຸ້ມ

ຕົວນ້ອງຫົ່ມໝາວ ພີ່ມາ

ຄາວເມື່ອຍຸງຍອງຮົມ

ກິນນາງອ້າຍກໍໄລ່

ບັດນີ້ໃຜຊິມາກອດນ້ອງ

ປະຄອງໄວ້ດັ່ງພີ່ຊາຍ ນ້ອງເອີຍ.



## *ບັ້ນນຶ່ງ ໃນນິທານນາງແຕງອ່ອນ*

ທ້າວອໍ່ຣະຈັກກິ ມະຫາວົງ ລູກພຍາເມືອງມະຄອນສີ ຍຸຄຣາດໄປຕໍ່ໄກ່ໃນປ່າ ເລີຍຫລົງປ່າ ແລ້ວໄປພໍ້ນາງແຕງອ່ອນ ທ້າວກໍໄປຫລົງມັກຫລົງຮັກນາງແຕງອ່ອນ ຊຶ່ງເປັນລູກຂອງພຍາກຸມພົນແຫ່ງເມືອງຊາວຊາດແຂ້ ແຕ່ນາງແຕງອ່ອນນັ້ນປາກຄວາມມະນຸດໄດ້ ແລະມີຮ່າງກາຍເໝືອນມະນຸດ ທ້າວອໍ່ຣະຈັກກິ ມະຫາວົງ ເມື່ອຫາທາງກັບຄືນເມືອເມືອງຕົນໄດ້ແລ້ວ ຈຶ່ງອ້ອນວອນແລະເກັ້ຽກ່ອນພໍ່ຕົນໄປຂໍນາງແຕງອ່ອນມາເປັນເມັຽຕົນຈົນໄດ້ ພຍາເມືອງມະຄອນສີ ຈຶ່ງແຕ່ງທູດໄປເຖິງພຍາກຸມພົນ ຣາຊທູດແຫ່ງເມືອງມະຄອນສີກໍໄປຮອດເມືອງແຂ້ ແລ້ວກໍມອບສານຖແລງຣາຊປະສົງຂໍລູກສາວ.

ອ່ານຄັກ ໆ ແລ້ວກໍປະກົດວ່າ ສານນີ້ເປັນສານຖແລງຄຳຮັກຂອງທ້າວຈັກກິເຖິງນາງແຕງອ່ອນ ໃນບັ້ນທ້າຍຂອງສານນີ້ ທ້າວເປີດຫົວອົກຕົນຕໍ່ນາງໂດຍຕຣົງ ແຕ່ບັ້ນຕົ້ນນັ້ນເວົ້າກັບພໍ່ຂອງນາງ.

# *ສາມຂໍນາງແຕງອ່ອນ*

ໂອນໍ ສາມນີ້ຊິວ່າ ອັກຄະສໍອໍຣະຈັກກິເຈົ້າ

ມະຄອນສິຖວາຍບາດ

ຖາມຂ່າວເຈົ້າລຸ່ມຟ້າ

ບຸນກວ້າງແຕ່ໄກ ແດ່ຖ້ອນ

ຂໍໃຫ້ເປັນຂົວແກ້ວ

ສະພານທອງ ທຽວທ່ອງ

ອັນວ່າ ເມືອງພຸ້ນພີ້

ກໍເໝືອນແທ້ດັ່ງດຽວ ຫັ້ນແລ້ວ

ບໍ່ກວ່າ ສັຕບົວຣະພັນຊຸ້ມ

ມະໂນຂັນໄຂກາບ ເອົາຖ້ອນ

ສຸດແຕ່ ພູອະມາດເຈົ້າ

ບຸນກວ້າງຊິຮ່ຳເພິງ

ຂໍໃຫ້ໄມຕີກ້ຽວ

ເປັນແຜ່ນທອງແດງ

24/VII
ຫ້າມຈຳໜ່າຍ

ວ່າຈັກຂໍສິສລຽວ

ພໍ່ເມືອງສົມສ້າງ

ອັນວ່າສອງຝ່າຍພົ້ນ

ໃຫ້ເບັ່ນແຜ່ນດິນດຽວ

ທາງຫຽວເຖິງ

ບ່ອງກັນເມືອຟ້າ

ອັນນຶ່ງ ຢ່າໄດ້ຕັດຂາດມ້ຽນ

ເສັຽທ່າງພຣະໄມຕຣີ ແດ່ຖ້ອນ

ຢ້ຳນທ່ໃນດວງຈິດ

ແຕກເພທະລາຍມ້າງ

ພໍກໍຄິດຕໍ່ນ້ອງ

ຕັ້ງຕໍ່ຄຳພື້ນ

ພໍກໍຍັງບັນທົມ

ເປົ່າເສັຽດາຍດູ້

ພໍກໍມີຂອງລົ້ມ
ຂັນມາການມາຝາກ
ມີທັງຂ້າຊ່ວງໃຊ້
ພໍຮ້ອຍມອບຖວາຍ

ອັນນຶ່ງ ມີທັງເງິນຄໍາລົ້ນ
ຫລາຍກີລ້ານຊັ່ງ
ຊ້າງແລະມ້າ
ພໍຮ້ອຍກ່າວສາມ

ຂໍເຊີນມາຖພໍເມືອ
ເມືອສ້າງນະຄອນສີ
ເບັ້ນເທີ
ຢູ່ເຝືອແຝງຂ້າງພໍຖ້ອມ

ຂັດນີ້ການສະເດັດມ້ຽມ
ທອນສາມຖວາຍບາດ
ຂໍແກ່ພູອະນາດເຈົ້າ
ບຸນກວ້າງຮໍາຄະນິງ ພໍຖ້ອມ

## ບັນນຶ່ງ ໃນນິທານທ້າວສິທົນ

ຫລັງຈາກນາຍພານເອົານາງມະໂນຣາມາຖວາຍ ທ້າວສິທົນແລ້ວ, ທ້າວກໍເອົ້າກ້ຽວນາງດ້ວຍຄວາມມັກແລະຈິຕສອາດ.

ເວົ້າເຖິງນາງມະໂນຣາແລ້ວ, ຜູ້ຂຽນກໍອົດສລອກກອກຊອກຫາຄວາມໝາຍຂອງຄຳວ່າ "ກິນນະຣີ" ຄຳວ່າ ກິນນະຣີ ນີ້ ເຄົ້າມາຈາກຄຳບາລີ "ກິງນຣະ". "ກິງ" ແປວ່າ "ຢ່າງໃດ" ສ່ວນຄຳວ່າ "ນຣະ" ແປວ່າ "ຄົນ". ຄຳເດີມ "ກິງນຣະ" ຈຶ່ງໝາຍຄວາມວ່າ "ຄົນຢ່າງໃດ ?" ຫລື "ຄົນຈຳພວກໃດເຜົ່າໃດ ?" ຕອບຍາກ ຈະວ່າສັດຊ້າວ່າບໍ່ເປັນ ເພາະນາງປາກເປັນແລະມີຮູບໂສມພົມພັນດັ່ງຜູ້ຍິງທັງຫລາຍໃນໂລກມະນຸດ. ຈະວ່າມະນຸດຫລືຄົນແທ້ກະວ່າບໍ່ໄດ້ ເພາະນາງມີປີກບິນເຫາະເຫີນເດີນອາກາດໄດ້ເໝືອນເທວະດາ ພວກ "ກິນນະຣີ" ຈຶ່ງເປັນພວກທີ່ເອົາມາຈັດເຂົ້າເຜົ່ານັ້ນພວກນີ້ໄດ້ຍາກ ໃນທຳນອງດຽວກັບຕົວເຈັຽຊຶ່ງຈະວ່ານົກກໍມີຫູ ຈະວ່າໜູຊ້າພະມີປີກ ຄົນບາງຄົນກະຍັງບໍ່ຮູ້ວ່າຈະເປັນຄົນຢ່າງໃດ : ຫົວເປັນແກວແຂວເປັນລາວຕົວຄິງເປັນຝຣັ່ງ.

# ທ້າວສິທົນແລະນາງມະໂນຣາ

ທ້າວ ສິທົນ :

ຂໍແກ່ນາຖພໍ່ນ້ອງ

ນາງຫລ້າຢ່າຊິຊັງ ພີ່ຖ້ອນ

ຄາວນີ້ບຸນຫລັງກ້ຳ

ນຳມາຍູ້ສົ່ງ

ພໍ່ພີ່ເຫັນພ້ານ້ອງ

ເບີ້ນບ້າຫລ້າຫລົງ

ຈຶ່ງໃຫ້ກູນາອ້າຍ

ໝາຍຊົມແກ້ມອ່ອນ ໆ ອອນແລ້ວ

ຢ່າໃຫ້ເຂີນຂາດຂ້ອນ

ຂລັງອ້າຍຜູ້ຢູ່ພອຍ ແດ່ຖ້ອນ

ພີ່ກໍຄອຍຈິດຕັ້ງ

ຫວັງເອົາເບີ້ນມິ່ງ

ທຸກສິ່ງໝາຍມອບນ້ຽນ

ພຣະນາງນ້ອງຜູ້ດຽວ ນີ້ແລ້ວ

ນາງ ມະໂນຣາ :

ນ້ອງນີ້ ບໍ່ໃຊ່ຮູ້ຮິດເບື້ອງ
ຄອງແຫ່ງແນວກະສັດ
ມະໂນໃນເໝືອນ
ດັ້ງຕີນເບັ້ມຂ້າ
ຫລິຈັກຫຽມເຖິງທ້າວ
ບາບຸນພູອະນາດ ໄດ້ມັ້ນ
ສົມແຕ່ເບັ້ມທາດໃຊ້
ຮອງພື້ນຈັ່ງຊິຄວນ
ອັນໃຫ້ສົມພຣະອອນອ້າຍ
ນາງພຍາຈັ້ງຊິແມ່ນ
ຄືນວ່າພຣະແຜ່ນພື້ນ
ກູມານ້ອງກໍ່ວ່າບຸນ ພຣະເອີຍ

## *ກາບ "ສານ ລຶພສູນ"*

ແມ່ນອີ່ຫລີ "ສານລຶພສູນ" ນີ້ ມີຄວາມລັບຫລືຄວາມຣະຫັດແຝງຢູ່ ຜູ້ແຕ່ງເວົ້າເປັນຜຍາແຫລມຄົມ, ແລະເປັນຍອດກະວີຜູ້ນຶ່ງຂອງຊົນຊາດລາວ ທ່ານຜູ້ນີ້ສົ່ງສານນີ້ເຖິງເພື່ອນຮ່ວມຊາດດ້ວຍຄວາມປາຖນາດີແລະຮັກແພງຍິ່ງ.

ວີຣະບຸຣຸດຜູ້ມີຄວາມຮັກຊາດອັນແຮງກ້າ ຊຶ່ງເປັນຜູ້ແຕ່ງສານລຶພສູນ (ຫລືລຶບພະສຸຣິຍະ) ນີ້ມີພອນສວັນອັນລ້ຳຄ່າໃນການແຕ່ງກາບກອນ ຜົນງານຊິ້ນນີ້ຂອງທ່ານຜູ້ນີ້ຈຶ່ງມ່ວນຈັບຈິດຕິດໃຈຂອງຄົນລາວທຸກຄົນຕລອດມາ ໜັງສື (ຫລືສານ) ເຫລັ້ມນີ້ມີສາມຂັ້ນ ຄື (໑) ຂັ້ນ ບັງຣະຫັດ, (໒) ຂັ້ນ ສົນທິຄິດ ແລະ (໓) ຂັ້ນ ສຸດທ້ອ່າວ. ສຳລັບແຕ່ລະຂັ້ນ, ນັກແຕ່ງຍອດອັນມະກັນລາວຜູ້ນີ້ໄດ້ໃຊ້ພາສາລາວ ແຕ້ມຂຽນຄວາມຮູ້ສຶກອັນລັບແລບແຫລມຄົມຂອງທ່ານອອກມາໄດ້ຢ່າງເປັນໜ້າງຶດງໍ້ອັສຈັນ ຊົນຊາວລາວຮ່ວມຊາດນັ້ນອາດປຽບໄດ້ເໝືອນພຣະຈັນ ຊຶ່ງໂຄຈອນເປັນດາວທຽມອັນສວຍສົດງົດງາມຂອງໂລກມະນຸດ ແຕ່ແສງດວງ

ພຣະຈັນນັ້ນລືຈະລຶບແສງພຣະສຸຣິຍາ ຫລືຕາເວັນອັນຈິງພລັງນັ້ນໄດ້ແຕ່ສາມ ໆ ມື້ສົ່ງຂ່າວບອກເພື່ອນຮ່ວມຊາດວ່າ ໃຫ້ພາກັນລຶບຜົນສະທ້ອນຂອງແສງຕາເວັນໃຫ້ໄດ້ ເພື່ອເອກຣາຊແຫ່ງຊາດລາວ ໃຫ້ຣະວັງພັຍອັນມະຫາສານນີ້ ຊຶ່ງຄອບງຳຊົນຊາດລາວຢູ່ໃນຕົວ ຄຳຣະຫັດຢ່າໃຫ້ເຖິງສອງ ໃຫ້ເບິ່ງຄັກ ໆ ໃຫ້ໃຊ້ກຳລັງບັ້ນຍາຮື່ມຕອງ ຊື່ວີຣະບຸຣຸດອາວຸໂສຄົນນີ້ແມ່ນຫຍັງໜໍ ? ສຳລັບຊື່ທ່ານຜູ້ຮັກຊາດຜູ້ນີ້ນັ້ນ ຄົນລາວຫລາຍຄົນຄິດວ່າແມ່ນ ເຈົ້າອະນຸວົງສ໌ນັ້ນເອງ ດັ່ງໜັງສື "ຊຸມພອນໄຕຣມາສສານ" ຂອງສະມາຄົມຊຸມພອນວັທນະທັມ ສບັບພິມເຜີຍແຜ່ເດືອນພຶສພາ ປີ ໑໙໗໘ (ໜ້າ ໓໐) ໄດ້ເອົາຕອນນຶ່ງຂອງກາບ "ສາມລຶມສູນ" ບັ້ນສົມທີ່ຄຶດມາລົງພິມໄວ້ໃຫ້ສະມາຊິກອ່ານແລະໄດ້ບອກວ່າ "ສານນີ້ຂຽນຂຶ້ນໂດຍ ເຈົ້າອານຸເບັ້ນສາມ ເຊິ່ງກ່ຽວກັບຄວາມເຈັບແຄ້ນແໜ້ນໃຈຂອງພຣະອົງ ມີທັງຮັກໂສກກັ້ນກັ້ນນ້ຳຕາ ມີທັງການເມືອງການບ້ານ ດັ່ງທ່ານຈະຮູ້ຈັກໃນບັ້ນສົມທີ່ຄຶດ"

ຂ້າພະເຈົ້າໄດ້ເລືອກຕອນທີ່ຂ້າພະເຈົ້າເຫັນວ່າມ່ວນຈັບຈິດຕິດໃຈຂ້າພະເຈົ້າຈາກທັງສາມບັ້ນຂອງສາມລຶມສູນ ມາຈັດພິມໃຫ້

ພີ່ນ້ອງທີ່ມີຄວາມຮັກແລະຫວງແຫນພາສາຊາດ ໄດ້ອ່ານອີກເພື່ອ ຄວາມອະພີຣົມສຳຣານ ແລະຄວາມຣະລຶກຊາບຊຶ້ງເຖິງ ຍອດບຸຣຸດ ນັກຂຽນລາວຜູ້ນຶ່ງ ຊຶ່ງໃນອະດີດໄດ້ຝາກສານນີ້ໄວ້ໃຫ້ແດ່ຊົນຊາວ ລາວເປັນນໍຣະດົກຕົກທອດກັນມາຫລາຍ ໆ ເຊັ່ນຄົນ ຈົນຮອດຍຸກ ປັຈຈຸບັນນີ້.

ນັບວ່າສານລຶພສູນນີ້ເປັນສານອະມະຕະ ທີ່ຈະຕິດຕາມ ກະຊັບຊຶ່ນບອກໃຫ້ຊົນຊາດລາວຂົນຂວາຍຫາທາງເຊີດຊູຕະກຸນລາວ ໃຫ້ດຳງຢູ່ຄູ່ຟ້າຕລອດການນານ ແນ່ນອນການຕັດການຍອນອອກ ມາດັ່ງຂ້າພະເຈົ້າເຮັດນີ້ ອາດເຮັດໃຫ້ບໍ່ບອກເຖິງແນວຄຶດສ່ວນໃຫຍ່ ຂອງແຕ່ລະບົນແລະອາດມີການຂາດຕົກບົກພ່ອງມາກ.

ສ.ພ.ວ.

## *໑. ຢອນອອກຈາກບັ້ນ ບັງຣະທັດ*

ໂອມໍ ສົງສານບຸບຜາພ້ອ

ດວງຫອມເຫີຍກິ່ນ ພີ່ເອີຍ

ພຸມມະຣິນ ສ່ອນແສ້ວ

ສແວງກ້ອກິ່ນລະອອງ

ເຈົ້າຜູ້ມາລາສ້ອຍ

ໄພພະນອມໃນບ່າ ຣຽມເອີຍ

ບານເຮື່ອແຫ້ງ

ຍາມແລ້ງຫລົ່ນດາຍ ແລມໍ

ມ້າສມຸດມູນມາກລົ້ມ

ລິບແຜ່ນທໍຣະນີ

ລົມພານພັດ

ຟາດຟອງກະຈາຍຟົ້ງ

ຫົງດຳຜ້າຍ

ບິນບົນສເນີອ່າວ

ສັງບ່ເປື້ອງປິ່ນຟ້າ

ມາພີ້ເພື່ອລົມ ຂ້າງເດ

ພີ່ຂໍຖາມຂ່າວນ້ອງ

ເນື້ອໃໝ່ມາຣະສິ

ມະໂນທວາມຍັງ

ທ່ຽງຈັມໃນທັ້ມ

ຫລືວ່າມະໂນທວາມນ້ອງ

ລົມຕິເປື້ອງແກວ່ງ

ຂໍແກ່ ອິນທະຣາດຮູ້

ຍາມເຕື້ອງໄຕ່ຕອງ ພີ່ຖ້ອມ

ປອງເຢີ ເຈົ້າຜູ້ໂສລະສະຈັ້ມ

ມະຫາພົມພຽງພາກ ກັມມັ້ມ

ໃສ່ສອງເຣືອງຮອດຟ້າ

ພິມານຍ້ຽມ ຜ່ພະໂຍມ

ຊື່ວ່າຍຸຕໂຍກພົ້ນ

ພາຍຣະເມກມອງມະທິ

ໄຕພະຕິງສາທິບ

ທີ່ສວາງສວັນຍ້ອງ

ຍົມຍັ້ງປາຣະມິກັ້ນ

ໄສຍານິດທະເນັ້ງ ມານັ້ນ

ມັບມື້ມິນພາກພົ້ນ

ແຖມຖ້ານຖ່າຍຣະດູ

ພົ້ນ.... ເບັ້ນດັ້ງໃຍບົວຂ້ອງ

ພາຍສົມສົມປໂຍກ ຈິ່ງແລ້ວ

ໂອ້ໂອບເອົາແມ່ບໍ່ອງ

ປຸນສ້ອມຊ່ວຍແຫລມ

ກໍ່ບ່ລຸລາບສ້າງ

ຊຳເລົ້າພອຍສລາງ

ມະໂນທວານທຸກ

ທັ່ງໂຮມຮາວບ້າ

ເບັ້ນດັ້ງ ອັກຄີໄໝ້

ຟອນຟາງເຟືອຍບ່າ

ຄຶດໄດ່ຫອບແມ່ມ້າ

ທັງຫ້າອາບສົງ

ກໍບໍ່ເບັ່ນໄປໄດ້

ໂດຍດັ້ງມະໂນມິກ

ເພາະວ່າ ມະຫາມາທີທັງເບັ້ງຈານ

ຢູ່ກອງໄກຮ້າຍ

ວ່າຈັກໂອມເອົາມ້າ

ອະໂນມາລ້າງສ່ອຍ

ພໍໃຫ້ທາຍໂສກຮ້ອນ

ຂມັງເບື້ອງຜ່າຍຫລັງ

ກັບກໍຕັ້ງເຂດໄອ້

ຫ້າຂອບພັນອັດສາ

ອານົມກິນກິນທາງ

ແຫ່ງມັນທະເນົາໄໝ້

ໄພພະມັງ໊ເຮືອ

ຮາວເຂົາຂຽວຄວິ່

ຄິດໄດ່ມ້າງມຸ່ນມ້ອຍ

ມົວຂອ້າໄຂອິ່ນ

ຫລາຍສ່ຳໄມ້

ໃນບ່າອະນັນໝັກ

ຫາລ່າເປ໋ນຂອງຫອມ

ແກ່ນຈັນບໍ່ມີໄດ້

ຄົນເຕັມບ້ານ

ຄາເມມີມາກ

ຫາຜູ້ຕ້ອງ

ມະໂນໄທ້ໄບ່ມີ

ຄິຄູ່ຈັນຮິກຟ໋າ

ເປ໋ນຄູ່ສຸຮະໂຍ

ຣັງສີໃສ

ສ່ອງເຍືອງຍັງດ້າວ

ຣັງສີຊ້ອນ

ຊົມກັນກາງກາດ

ບໍ່ອາດມ້າວແນບຊ້ອນ

ຊົມເຫລັ້ນກ່ອນຈຽງ

ອັນວ່າ ບຸບຜາຫ້າວ

ຫອມໂຣຍຣົດຮ່ອງ

ໝາມກ່ອນກ້ຽວ

ແກມກ້ານແຕ່ລໍາ

ມ້າວມອດຕ້ອງ

ເຕົ້າຕິ່ງຫອມຫອນ

ເດີນໄກພີ

ຈາກພຣະໄມ ມີໄດ້

ຫາກອ່າວ ຍິມຕລົບຊ້ອຍ

ແຊງປະຫຽມຫາທີ່ ມີໄດ້

ປຸມປຽບປານແມ່ຊ້າງ

ສາມຕື້ຕື່ມຕອງ

ຕ້ອງຕື່ມຂ້

ຂວານຜ່າຫູຜາ

ເສລາກອງກອນກະຈັດ

ມຸ່ນເຫັງເຫັນພື້ນ

ອິນຮ່ຳຖອງເຖິງແຈ້ງ

ລະດິໂດຍດອນເທດ ເຮວຖ້ອນ

ມິໃຫ້ຮັກພິ່ງພ້ຽງ

ຊິເອົາຕຸ້ມຕ່ອມຂວັນ

ພີ່ບ່ໃຫ້ຄາດຮ້າງ

ເຫິນຫ່າງພຣະໄມມິດ

ພໍພຣະໄທຈັກ

ໃຄ່ຄອຍຄອງຕຸ້ມ

ຂໍແກ່ອິສູນມ້າວ

ແນມສມອນຊຶມຊ່ອຍ

ອິນທາກຣອຍຣ່ຳເບື້ອງ

    ສມິຊ້ອນຊ່ອງເງົາຢູ່ແລ້ວ

ຣາຫູຣຽງຕົນເຂົ້າ

    ສູນພຣະຈັນ ແຖມເລົ່າ

ມົວມືດກຸ້ມກິບຟ້າ

    ບັງກັ້ງກ່ອມສມິ

ສມິເປື້ອງເລື່ອມຊອນ

    ຣຽງຣ່ອມຣາສີ

ປະເບິ້ງເງົາງອາມສມິ

    ບໍ່ສ່ອງໃສສູນໄພ້

ອາທິດທຽວເທິງຟ້າ

    ຣາສີຣຽງຣ່ອມ ກັນແລ້ວ

ຄັນວ່າ ຣາຫູຊ້ອນແຊກເຂົ້າ

    ສູນອ້າບໍ່ເຣືອງ

ອາທິດທຽວລ່ອງຟ້າ

ເງື້ອມແງ່ພະໂຍມບົນ

ຣາຫູບັງ

ເລື່ອມຣັງສີເສົ້າ

ອັນວ່າ ຈັນທະຣັງເຫລື້ອມ

ບໍ່ມີເພັງແຮມຄ່ຳ ອອນເອີຍ

ອາທິດບໍ່ເບັ່ງບ້າ

ເພັງແຈ້ງດັ່ງພຣະຈັນ.

## *....ຕອນນຶ່ງອີກໃນບັ້ນບັງຣະຫັດ*

ເທື່ອນີ້ ຮຽມຈັກລັດລ່ຽມຂ້

ໄຂດ່ອນໂດຍພລັນ

ບ່ໃຫ້ ເຫລືອບັ້ນຍາ

ຮ່າເພິງພໍສະດຸ້ງ

ຂຍາທິຖ້ອຍ

ຂນັງທວງ:ນັຽຣະມາດ

ຄິດວ່າ ຫວານລື່ນອ້ອຍ

ເລີຍສົ້ມກວ່າໝາກນາວ

ສັງບ່ຄິດຖື່ຖ້ອນ

ສເນີເນດ ພໍໂສມ ເດນໍ !

ບັດນີ້ ມາໄດ້ກຳຄຳເຫັນ

ເຫງືອກຜາງແດນລົ້ມ

ສັງມານົກມັກແດັ້ນ

ຕາຢູ່ໃນດໍ ແທ້ນໍ !

ສັງບໍ່ ມີພໍສອງ

ຈ່ອຍຢອງປາງແດ້ນ

ບໍ່ແມ່ນ ແມວມາມເຊື້ອ

ຮາຊສີສິງຫາຮາດ

ສັງມາມາບຊ້າງໃຫ້

ໂດນ້າ ຕື່ມຄະໂຍງ

ສັງບໍ່ ຫລິງຫາ ຊື້ອ

ສະກຸນວົງມານຊາດ ຕົນເດ

ມາດ້ວ ກົ້ມຂາບໄຫວ້

ດົນໃບ້ຊື່ອຊາມ !

## (໘) ປອນອອກຈາກບັ້ນສົມທີ່ຄິດ

ເຈົ້າຜູ້ ສົມພະຍັບເຂັ້ມ

ໄໝດຳຄຽນດາດ ອີ່ຣຽນເອີຍ

ສັ້ງມາມົວມືດກຸ້ມ

ກອນແພ້ນອັ້ງທອງ ແທ້ນໍ

ເມື່ອຊິໄຂຣະຫັດໃຫ້

ດອມຜົມພົ້ນສ່ອນ ໄປມັ້ນ

ຄັນວ່າ ໄຂຕໍ່ແລ້ວ

ມັນຊິຮູ້ຍາກກິນ

ເມື່ອຈັກ ໄຂຕໍ່ຫູສອງກ້າ

ກໍລົມພານພັດອອກ ໄປມັ້ນ

ເມື່ອຊິ ເວົ້າຕໍ່ໜ້າ

ຕາຊ້າຍກໍເຫລືອບແລ

ເມື່ອຈັກ ໄຂຣະຫັດໃຫ້

ດອມແຂນຊິຖົ້ມຖ່ອງ ໄປແລ້ວ

ມັນຈັກ ລະຖິ້ມໄວ້
ເພື່ອໃຕ້ທ່າເທິງ ບໍ່ຮູ້

ເມື່ອຈັກ ໄຂຕໍ່ດັງສອງກ້າ
ກໍກົວຈາມຟັງເຟ່ອນ ໄປແລ້ວ
ເມື່ອຈັກ ໄຂຕໍ່ເສື້ອ
ກໍຊັງເມັນທັງເຮືອດ
ດັ່ນບໍ່ ເບັ້ນດັ້ງຄວາມເຮົາເອົ້າ
ມອນກາງດິນໃຫ້ເຈົ້າສ່ຽງ ເອົາເນີ
ຢ່າໄດ້ ເອົ້າຕໍ່ເຊື້ອ
ດົນໃກ້ຕ່າງແຊງ

ດັ່ນວ່າ ໄຂຣະຫັດພ້ຳ
ຝົນລົມຊິລົ້ນຂອບ ລົງແລ້ວ
ເກັງທໍ່ ມ້າຖ້ອມກ້າ
ມາແລ້ງຂາດເຂິນ ບໍ່ຮູ້

ດັນບໍ່ ຂັນຕີເຍືອນ

ກໍເບີ້ນດວັນສ້ອຍສ່ອນ ໄປແລ້ວ

ຍ້ານທໍ່ ເສັຽພ່ອຍແກ້ວ

ດວງລ້າຄ່າເມືອງ ເຈົ້າເດ

ເສັຽທັງ ເຮືອຄ່ຳຄ້າງ

ຈິລທາເຊົາທ່າ ເຮົາມັ້ນ

ບໍ່ໄດ້ ເສັຽແຕ່ເບັ້ຽ

ສະເພົາຄ້າກໍຂາດທຶນ

ໝູຊິງມາຜືອໃຫ້

ຄືເຮົາຊິມີໂຊກ ແພງເອີຍ

ຍ່າໄດ້ ເອົາເງືອນຖ້ອຍ

ແມວຊິຮູ້ເມື່ອກິນ

ເຊີນແມ່ ທົ່ງພຣະໄທເຍື້ອນ

ຜຍາໄວໃຫ້ຄຶດຮ່ຳ ເອົາຖ້ອມ

ບໍ່ໄດ້ ເສັຽແຕ່ກ້າ
　　ມາເຮືອກໍ່ຫາກເສັຽ
ຄັນວ່າ ໄອຣະຫັດໃຫ້
　　ດອນແມວຊິເຕັ້ນຖ່ອງ ໄປແລ້ວ
ເບັ້ນດັ້ງ ລົມເປົ່າງື້ອ
　　ປ່ອຟົ້ງທົ່ວໄຟ

ຄັນບໍ່ ອັນຕິໄດ້
　　ຊິປ່ອໄປທຸກປະເທດ
ໝາວແລະເອົ້າ
　　ທັງຮ້ອນກໍ່ເກີດມີ
ຄຳນີ້ ເຕືອນສະຕິໃຫ້
　　ເຕເມເຈົ້າຂັ້ນທຸ່ມ ເອົາຖ້ອມ
ເຈົ້າຈົ່ງ ປິດທີ່ໄອ້
　　ຜອງເຫົ້າຊົ່ວຊິວັງ ແດ່ເນີ

ຄິດຢາກ ຈົ່ງໃຈຄ້າ
　　ກໍ່ມາແວທາງຖໍ່ ເຮືອນ່

ດຽວນີ້ ເສັຽກູເຫ້າຍ

ໂຫມຊິບ້ອງ ກໍບໍ່ມີ

ໂອມໍ ມາຍິນສົມເຫດ້ອຍ

ດອມປາຊິວຊິ້ນເງືອກ ຄິລິ

ເສືອຫາກ ວາງລູກໃຫ້

ພຽນລ້ຽງພ່າແມວ ດອກມາ

ຄໍານີ້ ຖວາຍແກ່ນັກປາດເຈົ້າ

ພຍາໄວໃຫ້ຕັດສ່ອງ ເອົາຖ້ອມ

ຍັງຍາກຖາມແຕ່ເຄົ້າ

ຂວັນເຮືອບ່ອຍມານ ມັ້ນເດ

ເມື່ອບ່ ຖາມຂວັນໄຂ້

ກອມຂິມຂັດອາດ ລາວ ຕີ້ !

ອອກເຫລືອງ ຄືເທືອດຄ້າງ

ແຖມຊ້ຳຕື່ມທວງ ແທ່ມ

ຄັນວ່າ ໝາວຖືໄຂ້

ກໍຢ່າຈົ່ມໃຈພອກ ສັງຖ້ອມ

ໝາກໄມ້ ຍັງຢູ່ຄ້າງ

ໃຜຊິຮູ້ເມື່ອກົນ ມັ້ນເດ

ກໍທ່ຊອມດູໝ້າ

ຄິງເຫລືອງ ເນື້ອຮ່າງ

ຈັກວ່າ ອອກເໝົ້າຊ້າງ

ໃດແທ້ ກໍໃຊ່ການ

ເອົາແຕ່ ໝໍໂທນຮູ້

ຊິຫາຢາໝອກໃສ່ ເອົາຖ້ອນ

ຄັນວ່າ ໝາກໄມ້ຄ້າງ

ຢາແກ້ກໍຫາກຍັງ

ຄັນວ່າ ຖາມຫາໄຂ້

ກໍອຳເຊິງເຕັມອາດ ໄປມັ້ນ

ບໍ່ຊາ ຊິໃຫ້ມັ້ງຢູ່ຖ້າ

ສເມິໝ້ຳ ຫ່ອງຝົນ ມັ້ນລິ

ເມື່ອບໍ່ ຖາມຫາຂ້

ເຮຮົນ ເຜິ່ນກໍຮຽກ ຫາມັ້ນ

ເຈົ້າບໍ່ ຍິກດື້ອໃຫ້

ໃຜຊິຮ້ອນຮ່ອນໃດ ມັ້ນເດ

ໂອນໍ ອຸສາບໍ່ເຄີຍຮ້າງ

ຮາມບາຫັຖບາດ ອິດູເດ

ແມ່ບໍ່ ເດີຍກ່າວຖ້ອຍ

ຖແລງເອົ້າຕໍ່ຜູ້ໃດ ດອກມາ

ບໍ່ທ່ອນເຫັນ ມາຮ່າວຮູ້

ຫລັງຊາດ ມາພົບ

ອາຍຸຍືນຍາວໝື່ນ

ພັນປີກໍເຫັນຫລາກ ມານີ້

ມາພົບງຖິກພ້ອງ

ທາງກ້ຽວກອດໝູ

## (ນິ) ປ່ອນອອກຈາກບັ້ນສຸດທີ່ອ່າວ

ໂອ໋ ຣຽມນີ້ ເປັ່ນດັ່ງປາຕາຍຂ້ອນ

ພອງມາມ້າເຂີນຂາດ

ຝົນບໍ່ ສົ່ງໂຜດໃຫ້

ຕາຍແລ້ງແດດເຜົາ ແລນໍ

ຄິດຕໍ່ ດອກຄັດເຄົ້າ

ບານຢູ່ກາງດົງ

ຄິດຕໍ່ ເດືອນາຍສົງ

ກໍເລົ່າມີລຳກ້ຽວ

ອັນນຶ່ງ ເປັ່ນດັ່ງພ້ຳຜ່າໄມ້

ລຳສ້ຽວສຽບໃຈ

ຜີບໍ່ ດາພິບໄອ້

ຊິພາຍທົ່ວທອບເອົາພີແລ້ວ

ນອນຫລັບ ຜັ້ນເຫັນແກ້ວ

ມີລາແຖງດວງຍອດ ຣຽມພຸ້ນ

ສະເດັດສູ່ຫ້ອງ
    ໂຮງແຈ້ງສ່ອງໃສ
ພໍ້ນວ່າ ຈັນທະຈອນເຂົ້າ
    ມາຮຽງຫ້ອງບາດ
ແລ້ວເລົ້າ ມ້າວແຜ່ນຜ້າ
    ສະແດງຕຸ້ມຫົ່ມນອນ
ແສນສິ່ງໃນທວງເອົ້າ
    ຫົມທວຍທານສ່ອງບໍ່ມີແລ້ວ

ເດືອນຍີ່ ມາຮອດແລ້ວ
    ແສນຮ້ອນເຫື່ອໄຫລ
ຕັ້ງແຕ່ ເດືອນສາມຄ້ອຍ
    ຮະດູເຖິງ ເດືອນສີ່ ມານັ້ນ
ເມຄະລົມ ໄຫລຫລັ່ງຍ້ອຍ
    ຮຳພ້າບໍ່ຂາດສາຍ
ວ່າຈັກ ລົງແຊ່ນ້ຳ
    ກໍມາຮ້ອນຮຸ່ມທວງ

ມັນທາກຂິນຂັດເອົ້າ

ໃນທອງ ສຸດທີ້ອ່າວ ຜູ້ດຽວແລ້ວ

ເຮຣົມ ເລີຍຄັ້ງແຄ້ນ

ທາມ້ອງກໍທ້ອງເອ

ຜັດແຕ່ ເດືອນທ້າຂຶ້ນ

ຖືດິງໄຂ້ບ່ສ່ອາງ

ເດືອນທົກ ມາຮອດແລ້ວ

ໝາວຊ້ຳຕື່ມ ຝົນ

ເດືອນເຈັດເດືອນແປດ

ດອນທີ່ເອົ້າ

ເດືອນເກົ້າ ດອນທີ່ຮ້ອນ

ສັງມາຊ້ຳຕື່ມໝາວ

ເດືອນສິບ ເດືອນສິບເອັດຂຶ້ນ

ໝໍກະຊາມໝັດໄຂ້ສັ້ນ

ເດືອນສິບສອງມາຮອດແລ້ວ

ດໍາໄຂ້ກໍບໍ່ທາຍ

ຍັງແຕ່ໝໍເຜີຍຜ້າ

ຖືດິງໝໍສົມ່ອຍ

ດຸ້ມສອ່າງມາແລະນ້ອຍ

ຖືຂົ້ນສົ່ນສາຍ

ລາງເທື່ອບາຍເອົາເຂົ້າ

ມາກິນດອມເພື່ອນ

ຕົກຄະມະເລີຍເລົ່າແດ້ນ

ກໍບາຍຖິ້ມໃສ່ຝາ

ເລີຍເລົ່າ ໝາງເໝັນເຂົ້າ

ທັງປາລາເລີກ

ເລີຍເລົ່າ ຕຸ້ມແຕ່ຜ້າ

ຜືນກ້ວາງກ່ອມນອນ

ໝາກໄມ້ດ້າງ

ກິນເຂົ້າກໍຈຶ່ງອົມ

ໄຜຜູ່ ເບັ້ນໝໍແກ້

ມິຢາອົດເຍື້ອນປິ່ນປົວແມ

24/VII

ຄັນວ່າຫາຍພຍາດຮ້ອນ

ຄຸນເຈົ້າບໍ່ໃຫ້ເສັຽ ດອກນາ

ອັນວ່າ ຊາຕາຂ້ອຍ

ເຄີຍກິນແຕ່ໝາກເວີ ມາອົມ

ປອດຫົວເຄີຍໄດ້ດົມ

ຂາຍສົ້ມໝາກສົ້ມໂອ

ພົ່ງເປີ ! ແພງສີສ້ອຍ

ສເນຫາ ສຸດທີ່ອ່າວ ຮຽມເອີຍ

ພີ່ຊິ ເຊື່ອງເງື່ອນໃຫ້

ເຫັນບົ້ນບ່ອນຊິໂຕນ

ຊາດທີ່ ເຮືອແພນີ້

ອາງໂຫມປາຍກູດ ຈົ່ງເບັ້ນດາຍ

ຂັດຖືກ ເວວາດທ້າຍ

ຫົວພີ້ທ່າຊິນໍ່າ

ໃຫ້ຄ່ອຍ ແປງໂຫມບ້ອງ

ຕາມຄໍຕິດຕໍ່ ແຊວຖ້ອນ

ເຊີນກູດ ບິດແງກທ້າຍ
ເວເຂົ້າບ່ອນຊິໂຕນ ແດ່ຖ້ອນ
ແນມທີ່ ໂຫມກິນນ້ຳ
ຊິເບັ່ນຂັນຮ້ອຍພ່ອຍ ກໍຕາມຖ້ອນ
ແສນຊິ ຟອງທຸ່ມກົ້ວ
ດົນທ້າຍ ຫາກຊິແຊວ
ມັນກາກ ເດີຍຕາຍມ້ຽນ
ດອນຂັນເດືອນແປດ
ພີ່ບໍ່ແພງພ່າຍເອີ້ອ
ຊິວັງໄວ້ທີ່ໃຍ
ເພີ່ນຫາກ ລືວ່າຮ້າຍ
ໃຈອ້າຍຫາກປະສົງ
ໄຖນາຍາມເດືອນຫ້າ
ຝົນຊິຮວາຍຍູ້ສົ້ງບໍ່ມີແລ້ວ
ເດືອນຈຽງເດືອນຍີ່ຫວ່ານກ້າ
ເດືອນຫ້າຈິ່ງຊິດຳ

ປີມືຖຶງມັເຈົ້າ

ແດງຫລວງພໍ່າຊິສົ່ງ ສິ່ງໃດນໍ

ມາແຊງ ໄຖບໍ່ໄດ້

ຕົມກ້ອພ້າຜະນຽງ

ວ່າຢາກ ຕິຝາຍຂຶ້ນ

ທາງະພືອມານ້າເຂີນຂາດ ເສັຽແລ້ວ

ວ່າຢາກ ອາສັຍນ້າຫ້ວຍນ້ອຍ

ເພືອງຊ້າຂາດເຂີນ

ປານນີ້ ດາວສະເດັດກ້ອ

ດວງແຂຊິມືດມຸ່ງ ບໍ່ມືແລ້ວ

ຮູ້ວ່າ ສຸຣິໂຍມາແລ່ນກຸ້ມ

ກຸມພຣະຈັນມົວມືດ

ອັງຄານມາບຽດເບື້ອງ

ບັງແກ້ວພ່ອຍພຣະຈັນ

ໂອນໍ ພຣະຈັນມາແສງເສົ້າ

ເສັຽສີພອງພົ່ນ

ມະນິເທດ ເບີ້ມແທ່ມແກ້ວ

ຕາງຜ້າຫົ່ມໝາວ

ອັນວ່າ ໃຈປະສົງຂ້ອຍ

ຢາກໄຖມາເຮື໊ອເກົ່າ

ຄັນເພິ່ນໄລຖົ໊ມໄວ້

ພຣະອວນອ້າຍຫາກສງວນ

ຊາດທີ່ ມາເຟືອງມີ໊

ຕາມໄຖດີຊີພ້ອມ ມີດາຍ

ເພື່ອງເພິ່ນ ຫາກໄຂເບີ້ງໄວ້

ຂັງມ້າຊີຢູ່ດີ

ຮຽມຫາກ ເບີ້ມດົນດ້ານ

ປະສົງຫາ ແຕ່ມາເກົ່າ

ມາຊ່າວ ມິບໍ່ແມ້

ພຣະອວນອ້າຍ ບໍ່ປະສົງ

ທົ່ງດຳຜ້າຍ

ເວຫາເທີນເມກ ງາມເດ

ກາດຳວ່າ ຢາກບິນແທບພົ້ນ
    ກົວຢ້ຳນບາດຊີທູນ
ແຊວເຢີ ຟູງດົນທ້າຍ
    ຂັນໂທມທັງຖໍ່ ແຊວຖ້ອນ
ດຽວນີ້ ຟອງທຸ່ມກົວ
    ແຊວເຂົ້າບ່ອນຮອມ
ຄັນໄດ້ຜິ່ງຫລັກແພັ້ນ
    ແສນຊີລົມ ມາຮ້ອຍທ່າ ກໍຕາມຖ້ອນ

ພາຍພໍ່ ຊີນອນທອດທະເນີ່ງ
    ແທງນພ້າເບິ່ງລົມ ດອກມາ
ພັ້ງເຢີ ! ບົວພັນສ້ອຍ
    ຈຳປາມະນີເທດ ຮຽມເອີຍ
ພີ່ຊີ ຖາມຂ່າວເຈົ້າ
    ພັ່ງແລ້ວຄ່ອຍຄະນຶງພໍ່ຖ້ອນ
ຮຽມຢາກເອົາໄພກ້ຽວ
    ຈຳປາແດງຄ້ອງເກດ

ເພື່ອນພີ່ໄດ້ສະສ່ອຍລ້າງ

ພິທູນເຂັມສວ່າງໃຈ

ຄິດວ່າ ຢາກເອົານ້ຳ

ອະໂນມມາ ມາລ້າງສ່ອຍສິມັນ

ມະຫານິນ ມັນຫາກຕົກສິກແລ້ວ

ພຽນລ້າງຫາກຊິໃສ ດອກມາ

ດວງນີ້ເຮົາບໍ່ໄດ້ຫາສຽດຂໍ້

ໃສເຮື່ອງຕໍ່ໃຜ ດອກມາ

ອັນນຶ່ງ ຮຽນຢາກຖາມຂ່າວໄພສີສ້ອຍ

ກາງສຖານຕົ້ນຕໍ່າ ຮຽມພຸ້ນ

ມັນຫາກມີຮົມກ້ອາງ

ດົມເຂົ້າດັ່ງໂຮມ ຢູ່ລື

ກາດໍາວ່າ ຢາກເຈີຍຈົມກ້ອ

ຈາຍະທິນທອມກິ່ນ ວ່າລື

ຕິແຕ່ໂຕຣູບຮ້າຍ

ດຳປີ້ ແປກກາ

ກາດຳວ່າ ຢາກລົງລອຍນ້ຳ

ອະໂນມາໃຫ້ຂາວຜ່ອງ ຊິຕິລີ

ແລ້ວຈຶ່ງ ເຫາະຫອບຜ້າຍ

ໃຫ້ໃສແຈ້ງດັ່ງພຣະຈັນ.



# ບັ້ນນຶ່ງຂອງນິທານນົກຈອກ

ສບັບວັດນາຊັຍ, ວຽງຈັນ

ທ້າວອໍຣະຈິດ ພຍາຍາມຍົວະໃຫ້ນາງຈັນທະຈອນປາກນຳຕົນ ແຕ່ນາງໄດ້ແສ່ງໄວ້ແລ້ວວ່າຈະບໍ່ປາກນຳຜູ້ຊາຍ.

ແຕ່ທ້າວກໍບໍ່ລະຄວາມຕັ້ງໃຈ ເພາະໝອນໝູນຫົວຂອງນາງຈັນທະຈອນເອງກໍເອົາໃຈຊ່ອຍ ໝອນນີ້ປາກເປັນເໝືອນມະນຸດ ໃນເມື່ອນາງຈັນທະຈອນບໍ່ຕອບຄຳຖາມ ແລະຄຳອ້ອນວອນຕ່າງ ໆ ນາ ໆ ຂອງທ້າວອໍຣະຈິດ, ເປັນອັນວ່າທ້າວຈຶ່ງປາກລົມກັບໝອນ ເປັນເຊີງຢອກເຢີຍກອນຈິດໃຈນາງຢູ່ບໍ່ເຊົາ. ໝອນນາງເອງກໍຊ່ອຍທ້າວຢູ່ບໍ່ໃຊ່ໜ້ອຍ.



## *ຄຳສຸກອັນຍິ່ງໃຫຍ່*

ທ້າວວໍຣະຈິດຖາມ :

ອັນວ່າຄຳສນຸກນີ້

ອັນໃດຍິ່ງກວ່າ ກັນນັ້ນ

ຂໍແກ່ເຈົ້າ

ໝອນແກ້ວຮ່ຳເພິງ ຫັ້ນທ້ອນ

ໝອນໝູບຫົວນາງຈັບທະຈອນຕອບ :

ອັນວ່າຄວາມສຸກນີ້

ຍັງມີຫລາຍສິ່ງ ຈິງແລ້ວ

ຕົ້ນວ່າໄປກິນເຫລົ້າ

ເມົາມົວຟ້ອນແອ່ນ

ປາກເລົ່າຮ້ອງ

ທັງອ່ານພັງສື

ຕາຊອນຫລຽວ

ຢອກໄຍສາວຫລິ້ນ

ອັນນີ້ ກໍຫາກດູສນຸກແທ້

ແຕ່ຍັງໄປ່ທັນເຖິງ ທ່ານເອີຍ

ອັນນຶ່ງພາສາວເຂົ້າ

ອະຣັນຍາໃນປ່ຳ

ດັ່ງວ່າ ເຫັນພຸ່ມໄມ້

ກໍຈຳຈູ້ມັ້ງລົງ

ມີເລົ່າຮ້ອຍດອກໄມ້

ທາງປາກຈາກັນ

ພ້ອງກໍມີຂາຍມົ່ນ

ກອດຄໍດົມແກ້ມ

ອັນນີ້ ດູສນຸກແທ້

ແຕ່ຍັງໄປ່ທັນເຖິງ ທ່ານເອີຍ

ດັ່ງວ່າໄດ້ເຂົ້າຫ້ອງ

ຮຽງຮ່ອມພຣະໄມຕຣີ

ສອງພໍກັນ

ຮ່ວມສະນອນ ໃນມຸ້ງ

ມີຊາຍຊວ້ານ

ຄຳນາງນ້າວຈູບ

ມີອ່ອນນ້ອງ

ນຽນໄລ້ໄຫລ່ຊາຍ

ອັນນີ້ ສນຸກຍິ່ງລ້ຳ

ໃນໂລກເມືອງຄົນ ພີ່ເອີຍ

ຄັນວ່າ ໃຜບໍ່ທັນເຄີຍພົບ

ກໍສ່ວນກັມມີແທ້

ຄັນວ່າ ຕາຍໄປແລ້ວ

ວົນວຽນບໍ່ໄດ້ເກີດ

ໃຜຜູ້ໄດ້ຈອບແລ້ວ

ກັມຮ້າຍບໍ່ມີ ທ່ານເອີຍ

## *ຍິງຜູ້ມີໂສກດີ*

ປອນອອກຈາກໝວດທີ່ເປັ່ນ ຄຳໂຄງພາສິດ ( ໂຄງສາຣະວິລາສິນີ ) ໃນຄັມພີໂລກະນິຕິ ໝັງສືນີ້ເຄົ້າເປັ່ນພາສາມະຄົດຫລືບາລີຣຽບຮຽງໂດຍທ່ານອະຍາສມະນັກປາດຊາວອິນເດັຽ ຕົ້ນສບັບນີ້ໄດ້ຖືກເອົາໄປແປເປັ່ນພາສາຕ່າງ ໆ ຂອງໂລກ.



## ຍິງຜູ່ທີ່ຈາຍລວນເອົາເປັ່ນນິ່ງຂວັນ

ຍິງໃດ ຜິວຜ່ອງພັ້ຽງທັມມະຊາດ

ດຳສຸກ

ຕາດຳເໝືອນເນດໃນ

ນາງເນື້ອ

ກາງຕົວ ເອິກໜອາດ້ອຍແອອກົມ

ກ້ຽວກິ່ວ

ຂາແຂ່ງ ຮຽວຮັດສ້ອຍ ຜົມດົ້ວ

ດວດສລວຍ

ແຂ້ວເຫລັ້ມນ້ອຍທັ່ງຖີ່

ແຖວສນິດ

ສາຍບໍ່ເລີກຮູບສາວ

ສເນີດ້ານ

ກິຣິຍາກ້າວ ເດີນງາມ

ຄະດ່ຽມ

ຍິງມັ່ນ ເຖິງສະກຸນຕ່ຳຊ້າ

ກໍຄອນໃຫ້ແອ່ອໂອມ ເອົາເຖັ້ມ



## ກອນລຳລາວ

ກອນລຳລາວເຮົານີ້ ມີຫລາຍສມົດ ຫລາຍແບບ : ລຳລ່ອງຂອງ, ລຳເຕີ້ຍ, ລຳງິ້ມ, ລຳສີທັນດອນ ແລະ ອື່ນ ໆ ແດນກັບໝໍລຳເບັ້ນສັນຍາລັກແຫ່ງຕະກຸນລາວໂດຍແທ້ ເຖິງຈະຕົກໄປຢູ່ນຳປະເທດໃດຫລືຂົ້ນກັບສັນຊາດອື່ນໃດ ໂດຍວິຖີທາງຂອງປະວັດສາດກໍຕາມ ຫາກວ່າກຸ່ມຊົນໃນປະເທດນັ້ນເປົ່າແຄນຂັ້ນແລ້ວຂັບລຳມ່ວນຊື່ນກັນຂຶ້ນແລ້ວແນ່ນອນທີ່ສຸດ ກຸ່ມຊົນໃນປະເທດນັ້ນແມ່ນເຜົ່າລາວຫລືຢູ່ໃນຕະກຸນລ້ານຊ້າງມາແລ້ວແຕ່ດຶງກ່ອນ.

ເພາະເຜົ່າລາວເທົ່ານັ້ນໄດ້ຟັງລຳແລ້ວວ່າ ມ່ວນ (ເຜົ່າຊົນຕະກຸນອື່ນເຂົາອາດຫາວນອນບໍ່ມ່ວນນຳ) ແລະເຜົ່າລາວເທົ່ານັ້ນກິນເຂົ້າໜຽວແລ້ວວ່າ ແຊບ ເຖິງວ່າເຜົ່າອື່ນເຂົາບໍ່ແຊບນຳໂຕກະຍ່ຳ.

ກິນເຂົ້າໜຽວທ່ຽວຟັງໝໍລຳໝໍແຄນນີ້ແຫລະ ຄືມູລຕະ

ກຸນລາວອັນແທ້ຈິງເປັນວັທນະທັມລາວອັນເກົ່າແກ່ທີ່ສຸດອັນນຶ່ງ.

ຂ້າພະເຈົ້າໄດ້ເອົາກອນລຳສາມສນິດ ມາຝາກໄວ້ນະທີ່ນີ້ ແດ່ພີ່ນ້ອງນັກອ່ານທັງຫລາຍ ພໍເປັນຕົວຢ່າງຫຍໍ້ ໆ ເຖິງຄຳເວົ້າບາງຄຳອາດບໍ່ແມ່ນຄຳເວົ້າມັກປາດ ແຕ່ຊາວນາລາວເຂົ້າໃຈດີແລະອອນຊອນດອນດ້ວຍ.



# ກອນລຳເກັຽວ

ພົ່ງຍິມ ດື່ມ ໆ ພ້ຳ
ຟາດລັ້ນຣະດູຝົນ
ຈິດພີ່ຫົມທອງດຶດ
ບ່ອງຊະເລເບັ້ນຂ້າ
ແດນແດ່ຣາມເຫັນໜ້າ
ນົງສີສຸດທີ່ອ່າວ
ຈັກວ່າໜາວແລຮ້ອນ
ນອນໄຂ້ບໍ່ສຳບາຍ
ທຸກມື້ອ້າຍເຢືອນຢູ່
ຊາມຕາຍ
ຍ້ຳມແດ່ສາຍດໍຣັກ
ບໍ່ອີ້ດູຕົນອ້າຍ
ສາວນາງ ສັງຊິປະຊາຍໃຫ້
ຕາຍໄປລົດຊື່ອ
ດັນບໍ່ເອົາເບັ້ນຜົວ
ພໍແດ່ໃຫ້ຮ່ອມບ້ານ ປານມັ່ນກໍ່ວ່າບຸນ

ນາງນັ້ນ ເປັ່ນດັ່ງແມອນມານເມື້ອ

ຂນຸນມັ້ມ່ອງ

ອ້າຍນີ້ ເປັ່ນດັ່ງເຊື້ອເໜືອດເໜົ້າ

ນາມນ້ອຍແດ່ດົງ

ນ້ອງບ່ປົງຈິຕດ້ອຍດອນຊາຍ

ຊາດຕ່ຳ

ແສນຊິຫັກໄມ້ດ້າ

ແສນຊິປ້າໄມ້ຍູ ຊູຂົ້ນກໍບ່ໄຫວ

ນ້ອງນັ້ນ ເປັ່ນດັ່ງມະນິໂຄດໄມ້

ຕົ້ນໃຫຍ່ໃບໜາ

ມິສາຂາງ່າງາມ

ເງົາກອ້າງ

ຍູ່ທ່າງພອງດມາເມື້ອ

ຫລາຍຊູມຊົ່ມຊຸມ

ພົ້ນແຕ່ ພໍດັ່ງອ້າຍ

ບ່ໝາຍໄດ້ຮ່ອມເງົາ

## ກອນລຳສາດ

ພັ້ງມາງພັ້ງ
　　ບຸບຜັງດອກກອກ
ພັ້ງພີ່ຊາຍຊິບອກ
　　ການເບັ້ນພໍ່ລຳ
ພັ້ງເອົາເດີໝາກທຳ
　　ຈຳເອົາຢ່ຳປາກ
ເບັ້ນພໍ່ລຳມັນຍາກ
　　ຍິ່ງກວ່າເບັ້ນນາຍ

ປາກໃຫ້ຄົນທັງຫລາຍ
　　ນິຍົມສົມໂພດ
ບໍ່ແມ່ນດີດ້ອຍໂຈດ
　　ສາດດ່າຫາກອນ
ຕ້ອງໃຫ້ມັນອອນຊອນ
　　ໄປໝົດທຸກຢ່າງ

ທັງຂາດຢ່າງ

ຂາດເວົ້າຂາດຈາ

ກິຣິຍາ

ງາມດີດ່ຽມດ້ອຍ

ໃຫ້ຮູ້ຈັກຜູ້ນ້ອຍ

ຜູ້ໃຫຍ່ປານກາງ

ຜູ້ໃດເບີ່ນຂຸນນາງ

ເຈົ້າຂຸນມູລມັ້ງ

ຕ້ອງໃຫ້ພາກັນມັ້ງ

ຕອບພອບຕອບຂາ

ແລ້ວຄ່ອຍເວົ້າຄ່ອຍຈາ

ຄວາມດີມີອາດ

ຖ້າວ່າເຈົ້າຊິສາດ

ກັບໝູ່ໝໍ່ລຳ

ກ່າໃຫ້ເຈົ້າລອງຄຳ

ຫົວໂຕເບິ່ງກ່ອນ

ອ່ອນຫລືແກ່

ຄວາມຮູ້ເຖິງກັນ

ໃຜບໍ່ອັສສະຈັນ

ດອກໃນເຣື່ອງກອນສາດ

ດຽວນີ້ ພວກມັກປາດ

ເພີ່ມບໍ່ນິຍົມ

ເພາະມັນເປັ່ນຄາຣົມ

ຄວາມກອນຫຍາບຊ້າ

ຄວາມເວົ້າກ້າ

ອອດເກ່ງດູຍໂຕ

ເຍົ້າໃຫ້ເກີດໂມໂຫ

ຜິດກັນດາຍດອກ

ຂ້ອຍຈິບອກ

ຈີສັງຈີສອນ

ອະທິກອນ

ຈຳເອົາຍ່າຄຽດ

ເຈົ້າບໍ່ແມ່ນລູກຂຽດ

ລູກເຕົ່າລູກປາ

ຂ້ອຍບໍ່ແມ່ນລູກໝາ

ລູກເປັດລູກໄກ່

ເຈົ້າກໍເປັນຜູ້ໃຫຍ່

ຮູ້ຈັກພາສາ

ສັງຈິມາຕົວເອົ້າ

ຄຳພື້ນປະຈານ

ໃນສຖານ

ປາງບຸນດົນມາກ

ເອົາແລ້ວລາກ

ໂຄຕແມ່ມາຈາ

ດ່າອອກພາ

ອອກພູອອກປອບ. ....

...ຯລຯ...



## ກອນລຳສາດ (ຕອນຍ້ອງ)

ພັ່ງນາງພັ່ງ ບຸບພັງດອກເປົ້າ

ເຂົາກໍລືອ່າເຈົ້າເບັ່ນນິ່ງທາງລຳ

ເພາະອ່າເຈົ້າລຳຈັງ

ສຽງດີປານຄ້ອງ

ພວກພີ່ນ້ອງ

ບ້ານໃຕ້ບ້ານເໜືອ

ຜູ້ມີເມັຽ

ປະເມັຽປະລູກ

ຜູ້ມີທູກ

ປະຝ້າຍປະໄໝ

ຜູ້ມີໄຖ

ປະນາປະຄາດ

ພາກັນຍາດ

ປົບແລ່ນມາພັ່ງ

ເພາະວ່າເຈົ້າລຳຈົງ

ລືມກິນຮອດເຂົ້າ

ພວກຜູ້ເຖົ້າ

ລືມລູກລືມຫລານ

ພວກແມ່ມານ

ລືມທິບຕິນສົ້ມ

ຫລຽວເບິ່ງພໍ່ແຕດປົ້ນ

ແດງຢູ່ພານລານ

ຈົ່ມວ່າ ພວກແມ່ມານ

ອອກລູກກັບບ່ອນ

# ອັສຈັນ ອັສຈ້ອຍ

ອັສຈັນ

ອັສຈ້ອຍ

ໄກ່ນ້ອຍ

ໄຫ້ກິນນົມນຳກາ

ໝູໝາ

ໄຫ້ກິນນົມນຳເສືອໂດ່ງ

ສັດຕູກັນແທ້ ໆ

ສັງມາໃຫ້ແອ່ອກິນ

ບັນທາ ພາສິດລາວບູຮານ



## *ສອນຄໍາທ້າວຫລືທ້າວຄໍາສອນ ຜູ້ຊອກເມັຽປະເສີດ*

ໃນໜັງສືພົມທ້າວຄໍາສອນ ຊຶ່ງນັກປາດບູຮານລາວຂຽນໄວ້ນັ້ນ, ເຮົາຈະໄດ້ເຫັນວ່າການຊອກຫາເມັຽຕາມຫລັກສູດບູຮານລາວນັ້ນບໍ່ໃຊ່ແມ່ນຂອງງ່າຍ ໃນໜັງສືຄັມພີໂລກນິຕິຊຶ່ງທ່ານອະຍາສົມະນັກປາດຊາວອິນເດັຽ ໄດ້ຂຽນໄວ້ເປັນພາສາສະກົດຫລືບາລີ ມີບັນຫານຶ່ງຊຶ່ງບອກເຖິງລັກສນະຂອງຜູ້ຍິງທີ່ມີໂສກດີ ເພື່ອວ່າຜູ້ໃດຫາເມັຽຈະເອົາໃຊ້ເປັນຫລັກສູດໄດ້ ແຕ່ໃນພົມທ້າວຄໍາສອນຂອງນັກປາດລາວນີ້, ມີຫລັກສູດຫລາຍກວ່າ ແລະ ຣະອຽດຣະອໍຫລາຍກວ່າໃນໜັງສືຄັມພີໂລກນິຕິມາກ ຍ້ອນວ່ານັກປາດບູຮານລາວຜູ້ນັ້ນຂຽນໜັງສືພົມທ້າວຄໍາສອນຂຶ້ນໂດຍມີເປົ້າໝາຍດຽວຄື ຈະສອນວິທີໃຫ້ທ້າວຊອກຫາໃຫ້ໄດ້ເມັຽດີ. ບໍ່ມີເປົ້າໝາຍອື່ນເໝືອນດັ່ງຄັມພີໂລກນິຕິ ນອກຈາກຈະມີໂສກດີຕາມຫລັກສູດແລ້ວ, ນັກປາດລາວຖືວ່າຈະເປັນເມັຽດີນັ້ນ ຕ້ອງຮັບຮູ້ປະຕິບັດຕໍ່ຜົວຫລາຍສິ່ງຫລາຍຢ່າງ ຜູ້ຊາຍຕ້ອງໄປຊອກຫາສໍາພາດໂດຍຕົນເອງວ່າ ຍິງຈະຮັບໄດ້ບໍ່ ?

ທ້າວຄໍາສອນເປັນຊາຍກໍາພ້າອາໄສຢູ່ໃນວັດ ມີນັ່ງທ້າວ

ອອກຈາກວັດ ລາອາຈານໄປຫາເມັຽຕາມຫລັກສູດອາຈານສອນສັ່ງ ໄປຮອດບ້ານທຳອິດຜູ້ຍິງສາວມີແຕ່ຜູ້ງາມ ໆ ລັກສນະກະຖືກໂສກຢູ່ ແຕ່ຂາດລົມໄປລົມມາລະວ່າ ຮັບເອົາຄວາມຮ້ອງຂໍຂອງທ້າວບໍ່ໄດ້. ໄປຮອດບ້ານທີສອງ ກໍມີແຕ່ຜູ້ມີໄຮມີໂລກຕາມຫລັກຂອງຜູ້ຍິງດີ ຊຶ່ງບົ່ງໄວ້ໃນຄັມພີໂລກນິຕິ ທີດຽວ ແຕ່ເມື່ອທ້າວເວົ້າຈາສຳພາດ ນຳແລ້ວກໍເຫັນວ່າຈະຮັບປະຕິບັດ ນຳຜົວຕາມຫລັກການຜູ້ຍິງລາວ ດີ ແບບບູຮານລາວບໍ່ໄດ້. ເປັນອັນວ່າທ້າວຄຳສອນໝົດຫົນທາງ ຫາເມັຽໃນຈຳພວກສາວງາມ ໆ ມັ່ງຮ້ອຍ ໆ ນັ້ນບໍ່ໄດ້ເລີຍ ຍ້ອນ ວ່າເຂົາເຈົ້າບໍ່ຮູ້ຄອງບູຮານລາວທີ່ດີນັ້ນເອງ ມີແຕ່ງາມຊື່ ໆ ເມື່ອ ໝົດຫົນທາງແລະອ່ອນກຳລັງໃຈໄປຫລາຍເຕີບແລ້ວກໍເລີຍຫຽວທາງ ມາເຊົາເມື່ອຍນອນສວາຍຢູ່ສາລາຮ້າງດົນທັ່ງບ່ອນນຶ່ງ ເວລາທ້າວ ນອນຫລັບຢູ່ນັ້ນ, ມີຜູ້ຍິງຜູ້ນຶ່ງເປັນສາວກຳພ້າຂໍທານ ນຸ່ງສົ້ນຂາດ ຫຽນໜ້າຕາແຫລ້ໝອງ ມານັ່ງເຊົາບ່າຍປ່າແດກກິນເພາະຂໍທານມາ ໄດ້. ເມື່ອທ້າວຕື່ນຈາກນອນເຊືອບຂຶ້ນມາ ກໍມາເຫັນວ່ານາງຄົນ ຂໍທານນັ້ນມີໂສກລັກສນະດີຖືກຕ້ອງຕາມຫລັກ ເລີຍສຳພາດນາງ ເປັນການໃຫຍ່ແລະນາງກໍຕອບຖືກໃຈຕົນ.

## *ທ້າວຄຳສອນໄປຮອດບ້ານທຳອິດ*

ທ້າວຄຳສອນຖາມພວກຜູ້ເຖົ້າຜູ້ແກ່ໃນບ້ານ :

ທານໂທດທ້ອນ

ພໍ່ແມ່ທັງຫລາຍ ຂອຍເອີຍ

ໃຜຍັງມີທິດາ

ລູກສາວສອນໜ້າ ນັ້ນບໍ່ ?

ໃຜຈັກຂານເບີ້ນເມັຽ

ສືບເຮືອນເຮົາໄດ້

ໃຫ້ຮູ້ຈັກການໃຊ້

ເງິນຄຳທຸກຢ່າງ

ທັງບໍ່ໃຫ້ຂີ້ຄ້ານ

ການຍ້ຳວຄ່ຳແລງ

ຄັນໃຜວາງລູກສາວໃຫ້

ເບີ້ນມິ່ງເມັຽເຮົາ ດັ່ງນັ້ນ

ກໍຈັກມີຄວາມສຸກ

ສືບສະກຸນໄປໜ້າ

ເຮົາຈັກໂຖມະນາໃຫ້

ບຸນຄຸນຄວາມຊອບ

ອັນວ່າຄຳຮ້ອຍນີ້

ຊິວາງໃຫ້ໃສ່ມື ແມ່ເອີຍ.



ພວກຜູ້ເຖົ້າຜູ້ແກ່ ພາກັນຮ້ອງຮຽກໝູ່ນົງຮາມລູກເສ້ຫລານ
ສາວພວກຕົບມາຕໍ່ໜ້າທ້າວ :

ມາເຢີ ! ສາວຄຳບົ້ອງ
ສາວສອນ ສາວອ່ອນ
ເຈົ້າຕ່ອນຊ້ອຍ
ມາພ້ແມ່ຊິຖາມ
ສາວສີພ້ອມ
ສາວມ່ອມສາວຈັນ
ກັບທັງສາວຄຳພັນ
ແມ່ແພງປານແກ້ວ

ສາວແຫລວຫລ້າ
ທົ່ງຄຳດົ໊ອກ່ອງ ມາເຢີ !
ມາເຢີ ! ສາວຄຳກອງແອ່ນແກ້ວ
ສາວຊ້ອຍໃຫ້ຣີບມາ

ແມ່ນວ່າສາວອຸ່ມຫລ້າ

ສາວທົ່ງສາວໃສ

ສາວສີໄວສືວັນ

ທ່ອນຈັນໃຫ້ພາພ້ອມ

ມາເຍີ ! ສາວດຳລ້ອມ

ບົວລາມະລິແຈ່ມ

ສາວບຸນແຖມນອກບ້ານ

ມາພໍ້ແມ່ຊິຈາ

ອັນນຶ່ງລູກແມ່ບ້ຳ

ເຮືອນທົ່ງສາວພອນ

ສາວດຳນອນດຳມີ

ຜູ້ດີມີແຍ້ມ

ສາວບຸນເຕີມບຸນແຕ້ມ

ຫົວແກມວາດດ່ອງ ມາເຍີ !

ມາເຢີ ! ສາວສີຟອງບ້ານໃຕ້

ໄວຫ້ອນແມ່ຈິຖາມ

ມາເຢີ ! ສາວຄຳຫລ້າ

ເຮືອນທ່າຫລັງສູງ

ສາວມຸງທັງສາວພິມ

ອິ່ມຮຽງມາພ້ຳວ

ທັງສາວດາວສາວສ້ອຍ

ສອຍວອຍເຮືອນຕ່ຳ

ສາວກ່ຳກາຣູບໂກ້

ດຳແປ້ນແອ່ມມະນີ

ຜຸສດີຕ່ອນຈ້ອຍ

ໃຫ້ເຈົ້າຄ່ອຍມາໄວ ແມ່ເນີ !

ສາວຄຳໃບຈັນເພັງ

ເຮັ່ງມາຍ່ຳຈ້າ

ສາວດຳຫວາດຳແຫວັນ

ແຫວນທອງມ້ອງມີ ມາເຢີ

ອໍຣະດີຕູ່ເຕື້ອ

ຢ່າເຫລືອໄວ້ຢູ່ເຮືອນ

ແມ່ນວ່າສາວເຟືອນພ້ອມ

ໄຂກາບໄກສອນ ກໍດີ

ສາວບັງອອນບ໊ອມີ

ທີ່ບໍ່ເຄີຍລືມຊູ້

ສາວດຳນູເຮືອນໃກ້

ສຸດໃຈພໍ່າວແລ່ນມາຫ້ອມ

ສາວແກ່ນດຳແກ່ນແກ້ວ

ມາແລ້ວແມ່ຊິລືມ

ມາເຢີ ! ສາວຍອດອື້ມ

ດຳຕຸ່ມບຸມສີ

ສາວບົວມີບົວອັນ

ແອ່ມາຍ່ຳຊ້ຳ

ສາວບັບພາພວງແກ້ວ

ສາວແພວສາວພັ້ນ

ສາວທອງຂັນລູກມ້າ

ເຂັນອ້ຳ ດອກປະຍອມ

ມາເຢີ ! ສາວຄຳຫລອມ

ໝູແກ້ວ

ຄຳແຕວໝູສ່ຽນ

ແມ່ເອີຍ

ສາວສັງວຽນຜູ້ນ້ອຍ

ສາວສ້ອຍກໍໃຫ້ມາ

ສາວສີດາດອກເປົ້າ

ບຸນເກີດກັນມີກາ

ສາວພຸດທາສາວເດືອ

ເດືອແດງແສງມ້ອຍ

ທັງສາວລອຍສາວລົ້ມ

ບໍ່ລືມບ້ານໃໝ່ ມາເຢີ !

ສາວຄຳໄຫວແອ່ນຟ້າ

ມາພົ້ຄູ່ຊູ່ຄົ້ນ

ມາເຢີ ! ສາວຄຳອົ້ມ

ສາວອາດສາວແໝງ

ທັງສາວແວງອັນລີ

ທີ່ບໍ່ເຄີຍຄອງຊູ້

ສາວບຸນຊູສາວສູ້ຍ

ສາວຜູຍສາວຜ່ອງ ມາຫ້ອມ

ສາວທອງປານ ກ້ອນແກ້ວ

ຄຳແຜ້ວອີ່ແມ່ມາ

ມາເຢີ ! ລູກກຳພ້າ

ສາວມິ່ງມຸງຄຸນ ແມ່ເອີຍ

ສາວອາຣຸນ ດົນພອຍ

ພໍ່ແມ່ຕາຍພົດກ້ຽງ

ທັງສາວມຽງສາວໝົ້ນ

ສາວບົວພັນພ້ອມເພິ່ນ ມາທ້ອນ !

ສາວຄຳເຕີມຕ້ອນຮູ້

ກູເອີ້ນໃຫ້ຮີບມາ

ສູ່ຢ່າໄດ້ຢູ່ຊ້າ

ຊິເສັຽທ່າທາງປະສົງ ແມ່ແລ້ວ

ໃຫ້ຄ່ອຍຈົ່ງໃຈມາ

ຮອດຕູເຮືອຮ້ອນ

ພາກັນມາໄວທ້ອນ

ສາວຣາມຮ້າງຖ່າວ

ກັບທັງສາວສ່ຳນ້ອຍ

ໃຫ້ມາພີ້ດູສູ່ຄົນ ແມ່ເນີ

ທ້າວຄຳສອນປາກຕໍ່ໝູ່ບາງສາວບ້ານທີ່ນຶ່ງດັ່ງນີ້ :

ໃຜຈິເປັນເມັຽຮອຽມ
ໃຫ້ເຈົ້າຢຳແຢງຂ້ອຍ ໄດ້ບໍ ?
ອັນວ່າ ຍາມນອນໃຫ້
ປັດພອນປູເສື່ອ
ສ່ວນວ່າ ຫົວແທ່ງມ້ອງ
ພຽງຂ້ອຍເດິງດຶງ ໄດ້ບໍ ?
ອັນນຶ່ງ ໃຫ້ລຸກແຕ່ເຊົ້າ
ປັດກວາດເຮືອນຊານ

ທັງເຮືອນຄົວ
ສະອາດຕາຢ່າດ່ານ
ແລ້ວເລົ່າເອົາຍຸງມ້າ
ອຸທະກັງລ້າງສ່ວຍ
ຜ້າເຊັດໜ້າ
ມາພ້ອມຊູ່ອັນ ໄດ້ບໍ ?

ແມ່ນວ່າກິນເຂົ້ານັ້ນ

ອ້າຍກິນກ່ອນສາມຄຳ

ບາດວ່າໝາຍລຸນມາ

ນ້ອງຈິ່ງກິນນຳອ້າຍ ໄດ້ບໍ່ ?

ອັນນຶ່ງໃຫ້ ນ້ອງອຸປຖາກອ້າຍ

ທຸກເຊົ້າຄ່ຳອັນດື່ມ

ບໍ່ໃຫ້ມີຄາວຫລົງ

ປະໝາດຄອງຄຸນແກ້ວ

ດີວ່າອັນສິນນັ້ນ

ໃຫ້ສົມມາອຸປຖາກ

ຫາໝູ່ຂັນດອກໄມ້

ສົມມາອ້າຍ ຄ່ອຍຖນອມ

ແລ້ວຈິ່ງຍໍໃສ່ເກົ້າ

ເອົາມືແທ່ງຂອງຮຽມ

ວາງໃສ່ເທິງສີຣະສາ

ແຫ່ງອອນອົງນ້ອງ

ອັນນຶ່ງປາກກ່າວຕ້ານ

ຍ່ຳໄດ້ແຜດສຽງແຂງ

ໃຫ້ຄ່ອຍມີສຽງຫວານ

ມ່ອນຫູຄີ້ຄ້ອຍ

ຄືວ່າກູມຶງມັນ

ມັນມຶງບໍ່ໃຫ້ວ່າ

ໃຫ້ວ່າເຈົ້າແລະຂ້ອຍ

ຜອງເຫົ້າຊື່ວຊິວັງ ໄດ້ບໍ່ ?

ອັນນຶ່ງ ຄຳດ່າຂ້ອຍ

ເປົ່າປອບໂພງຜີ

ຄຳອັບປີຈັງໄຣ

ບໍ່ໃຫ້ເອົາມາເວົ້າ

ທັງຄວາມຜິດຖຽງມັນ

ບໍ່ໃຫ້ມີຈັກເທື່ອ

ຕັ້ງໃຫ້ ແມ່ນອ້ອຍຊ້ອຍ

ໃຈຂ້ອຍຜູ້ດຽວ ໄດ້ບໍ

ອັນນຶ່ງ ຫລອນວ່າພາຍໜ້າພຸ້ນ

ມີໂຊກບຸນຫລາຍ ບໍ່ຮູ້

ອ້າຍຈັກເອົາເມັຽສອງເມັຽສາມ

ກໍ່ຢ່າຂົມໃຈອ້າຍ

ອັນນີ້ ໃຜຈັກບົວຣະບັດໄດ້

ສາວເອີຍໃຫ້ເຈົ້າວ່າ ມາຫ້ອມ

ຕາບຕໍ່ເຈົ້າແລະຂ້ອຍ

ເຖິງເຫົ້າຊ້ອມອມ ພຸ້ນແລ້ວ.

ຜູ້ສາວບ້ານທີ່ນີ້ງນັ້ ພາກັນທັວຂວັນທ້າວຄຳສອນ ແລ້ວໄລ່ກຸມຈົກໂສ້ງລາວ ທັງດ່າປ້ອຍ :

ໄປເຢີ ! ຂາຂ່າວທ້າວ

ຜູ້ຈິໂພນລົມ

ໄປທ້ອນ ! ຕູບໍ່ຂາມເບັ້ນເມັຽ

ປິ່ນປົວໂຕໄດ້ ແລ້ວຮ່າ !

ຮຽນບໍ່ຂົວຣະບັດແລ້ວ

ຮາມນອນດາຍດອກ

ພໍ່ແມ່ລ້ຽງແຕ່ນ້ອຍ

ຍັງບໍ່ໄດ້ປິ່ນປົວ ດອກນາ

ອັນວ່າຜົວລ້າ ໆ

ບໍ່ໃຫ້ອີ່ມກະໂບງທ້ວ

ຊາຍໃດຂາມເບັ້ນຜົວ

ຈິດ່ອຍໄປຕາມເຮືອງ

ໂອນໍ ! ເຈົ້າຜູ້ຜ້າຂາດກົ້ນ

ເຫລືອພົ້ນແຕ່ໂຕ

ໄປເຢີ ! ໄປເຢີຊາຍໂພນເອົ້າ

ທຳໄປງຜ້າຂາດ ອີ່ຣຽມເອີຍ

ຕູກໍມັກບໍ່ແພ້ແຫລ້ວ

ຫາກກົອຍ້ຳນແຕ່ຄວາມ

ເຈົ້າສັງມາຮ່າວເອົ້າ

ເອົາແຕ່ໃຈໂຕ ນັ້ນເດ

ມາບໍ່ຈຽມໃຈໃຜ

ດັ້ງດວາຍກິນຫຍ້າ !

ອອກຈາກບ້ານທີໜຶ່ງແລ້ວ, ທ້າວຄຳສອນໄປປ່າວເອົາເມັຽ ຕໍ່ສາວບ້ານທີສອງອີກ ແຕ່ຜູ້ສາວບ້ານນັ້ນ ເວົ້າວ່າຄ່າສິງຄສີ ອີກທ້າວຈຶ່ງຕອບວ່າ :

ຣຽມນີ້ ເບັ່ນສິດເຈົ້າ
ຣາຊດູເຖນໃຫຍ່
ຢາກໄດ້ເມັຽຜູ້ຣ້
ຈິ່ງຫາເອີ້ນຮຽກເອົາ
ດັ່ນວ່າເຈົ້າພີ່ນ້ອງ
ສູທ່ານທັງຫລາຍ
ຫາກບໍ່ຂາມເບັ່ນເມັຽ
ກໍຊ່າງໃຈສູທ້ອນ

ສູຈົ່ງມອມດອງຖ້າ
ຊົມຊາຍຊັ່ນຊົ່ວສູມັ່ນ
ອັນວ່າຕົວພີ່ນີ້
ບໍ່ມີຮ້ອນຄ່າໃຍ ດອກນາ

ອົດໃຫ້ເຍື່ອມອາດໄວ້

ຕາມຊາດຊູມພານ ເຈົ້າແດ່

ແນວຂັນດີດຄືເຮົາ

ຢ່າຫວັງຊິຂໍຊ້ອນ

ຢ່າໄດ້ແຊວ ໆ ຮ້ອງ

ສະຫາວຄວາມແຂງຂື່ດັ້ງ ຫລາຍທ້ອນ

ຊາຍຜູ້ດີຈັ້ງອ້າຍ

ບໍ່ມີງຕໍ່ຜູ້ສາວ ດອກນາ

ເຖິງວ່າໄດ້ບໍ່ໄດ້

ກໍ່ຊິຢູ່ຕາມບຸນ

ອັນວ່າດອງສັງໂດ

ກໍຫາກຍັງພໍ້ຊົມ.

ໝູ່ຜູ້ສາວບ້ານທີສອງຮ້ອງເວົ້າສູງຄສີ :

ໄປເຢີ ! ເຈົ້າຜູ້ຮູ້
　　ມັກປາດຜຍາຫລາຍຂ້ອຍເອີຍ
ເຈົ້າຢ່າມາໂພນລົມ
　　ພ່າຍອິມເຍືອນພ້າ
ໃຫ້ເຈົ້າໄປຫາເອີ້ນ
　　ເອົາເສັ້ຽທາງໃໝ່
ຫລອນວ່າຍັງຊິໄດ້
　　ແຂວນຜ້າກະຕ່ຽວເມືອ ບໍ່ຮູ້

ຕູ້ມີຂໍ້ມີບຸນກວ້າງ
　　ບໍ່ໄດ້ຮ່ອມອາຈານ
ບູຮານຕູບໍ່ເຄີຍຊົມ
　　ດັ່ງບາໄທທ້າວ
ເຈົ້າຢ່າມາຮ່າວເອີ້ນ
　　ຊິເສັຽແຮງຄຳໂກກ ອີ່ລຸງເອີຍ

ເຈົ້າຢ່າມາເຮັດໜ້າບູດບູ້
ຕາປົ້ມກ່າວຈາ ພິທ້ອມ

ກູໜ່າຍຊາຍປາກກ້ຽງ
ລ້ຽວໂລບໂມໂຫ ຊວາດມີ້
ພໍຢາກເອົາມາຕຳ
ໃຫ້ໝຸ່ນເສັ້ຽປານແປ້ງ.



ທ້າວຄຳສອນຕອບຄຳຕ່າຂອງຜູ້ສາວບ້ານນັ້ນດັ່ງນີ້ :

ຄ່ອຍຢູ່ດີເຢີ ! ສາວພີ່ນ້ອງ
ດົນຖ່ອຍອະລັດຊິ ຂ້ອຍເອີຍ
ຮຽນຫາກສອນຄຳດີ
ກໍເລົ່າກາຍເປັນຮ້າຍ
ສູນີ້ ເປັນດັ່ງພຍາໂກຣົບທ້າວ
ຣາຊາສເວີຍຣາດປາງນັ້ນ
ກາຣັດຖາທິຣາດທ້າວ
ນຳເຂົ້າສົ່ງສານ
ບັນຫາໃຫ້
ຖວາຍພຍາມາມອບ
ເລີຍເລົ່າແກ້ບໍ່ໄດ້
ຄຳຮ້າຍຄຽດຟຸນ
ແລ້ວເລົ່າອ້າງຕໍ່ຊ້າງ
ຊົນຕໍ່ກາຣັດຖາ

ມິຕິທອງ

ຖອດຕາວກຳດ້າມ

ພາຍລຸມສູ້

ສົງຄາມຣົບຣາບ

ເລີຍເລົ່າສູ້ບໍ່ໄດ້

ເສັຽພ້າດອບສະຫາວ ມັ້ນແລ້ວ.

ໃຈພໍ່ອມສາວເບັ້ມດັ່ງມັ້ນ

ສູຊິເກີດມາສັງ

ສັງບໍ່ແທງດໍລັດ

ສັງບໍ່ຕັດດໍຕາຍ

ຕັ້ງແຕ່ດາວຍັງນ້ອຍ

ພຸ້ນເດ

ອັນວ່າປິຕາພ້ອມ

ມາດາພໍ່ແມ່ສູມັ້ນ

ກໍບໍ່ສອນສັ່ງໃຫ້

ດີຮ້າຍຮິດຄອງມັ້ນລິ

ຄຳປ່າວຂອງທ້າວຄຳສອນໃນໝູ່ບ້ານຕ່າງ ໆ.

ພີ່ນີ້ ຄຳສອນນ້ອຍ

ກຳພອຍທຸກຍາກ

ຮູບຮ່າງຮ້າຍ

ໃຈອ້າຍຫາກດີ

ອ້າຍບໍ່ມີທີ່ຈ້ອນ

ຈິ່ງດັ້ນທ່ຽວມາຫາ

ໃຜຈິຂານເບັ່ນເມັຽ

ຢູ່ກິນດອມອ້າຍ

ໃຫ້ດ່ອຍບ້ວຣະບັດຂ້ອຍ

ເຖິງຈິວັງເທົ້າຈົ່ວ

ອຸປຖາກອ້າຍຊູ່ມື້

ພອງເທົ້າຈົ່ວຈິວັງ ໄດ້ບໍ ?

ອັນນຶ່ງ ຫລອນວ່າພາຍໜ້າພຸ້ນ

ມີມາກເງິນຄຳ ເມື່ອໃດ

ອ້າຍຈັກເອົາເມັຽສາມ

ກໍຢ່າຂຶມກໍ່ໃຈອ້າຍ

ໃຫ້ເຈົ້າແປງໃຈກວ້າງ

ສເມີວັງແມ່ນ້ຳໃຫຍ່

ບໍ່ໃຫ້ມີຂຸ່ນຂ້ຽວ

ຂົມຄ້ອຍເຍື່ອງໃດ ໄດ້ບໍ່ ?



*ທ້າວຄຳສອນພົບນາງກອງສີ ຜູ້ຈະເປັນເນື້ອຄູ່ ທີ່ສາເລາຮ້າງນາງເປັນກຳພ້າຂໍທານເພີ່ນກິນ.*

ທ້າວຄຳສອນຖາມນາງກອງສີ :

ອັນວ່ານົງຄານມາ

ແຕ່ໃສເຖີງພີ້ ?

ສາວຄົມດີນອນນ້ອງ

ເປັນເມັຽອ້າຍບໍ່ ?

ເຈົ້າຊິອຸປຖາກອ້າຍຊູ່ມື້

ຜອງເທົ້າຊ່ອຊິອັງໄດ້ບໍ່ ?

ໃຫ້ນ້ອງຄຶດຕໍ່ຕັ້ງ

ຮີດແຫ່ງຄອງຍິງ

ຈັກໄປມາທາງໃດ

ໃຫ້ສັ່ງລຳລາອ້າຍ

ທັງໃຫ້ບົວຣະບັດອ້າຍ

ຟີນໄຟນ້ຳຮ້ອນອຸ່ນ

ພໍເມື່ອຕົ້ນມີເຂົ້າ

ໃຫ້ຫາມ້າໃສ່ຂັນ

ຜ້າເຊັດໜ້າ

ເຈັຽປາກສີພັນ

ທັງເລົ່າຫາຢາດອັນ

ກອກກຳມາພ້ອມ ໄດ້ບໍ່

ອັນນຶ່ງ ອັນສົມນັ້ນ

ໃຫ້ສົມມາອ້າຍພີ່

ມີດອກໄມ້

ທຽມພ້ອມໝາກພູ

ຍໍຍື່ນໄຫວ້

ອ້າຍພີ່ພຽມຖອີນ

ຕີນມືເຊັດ

ໃສ່ປັ້ມປາຍເກົ້າ

ອັນນຶ່ງ ຍາມນອນນັ້ນ

ໃຫ້ຮຽນນອນເສັຽກ່ອນ

ສ່ວນວ່າເຈົ້າຕ່ອນຊ້ອຍ

ຈຶ່ງຄອຍເຂົ້າບ່ອນນອນ

ຍາມນອນແທ້

ໃຫ້ເອົາຫົວພຽງເຄິ່ງ ຄິງເນີ

ຢ່າໃຫ້ຫົວແທ່ງນ້ອງ

ສູງພົ້ນບໍ່ດີ ນ້ອງເອີຍ

ຍາມເມື່ອມີຄຳເວົ້າ

ຢ່າແຜດສຽງແຂງ

ຄຳຜິດຄຳຖຽງກັນ

ຢ່າໃຫ້ມີເມືອພ້າ

ຄຳວ່າກູມຶງມັ້ນ

ຢ່າໃຫ້ມີຈັກເທື່ອ

ໃຫ້ວ່າເຈົ້າແລະຂ້ອຍ

ຜອງເທົ້າຊົ່ວຊີວັງມັ້ນເນີ

ນາງກອງສີຕອບວ່າ :

ຄັນວ່າເຈົ້າຫາກລ້ຽງ
ບ່ຂິນແທ້ທ່ໃຍ
ຂ້ອຍມີທຸກຍາກແທ້
ພ່ແມ່ຕາຍເສັຽ
ມີແຕ່ຄົນດຽວຣຽມ
ທ່ຽວຂໍກິນແທ້
ເຈັດປີຖ້ອນ
ຂໍທານທຸກແຫ່ງ
ໄດ້ເທື່ອໜ້ອຍ
ມາແລ້ວເລົ່າກິນ
ເຄື່ອງນຸ່ງຫ້ຽມ
ເຂິນຂາດຈ່ຳແອວ
ສອຍວອຍເສັຽ
ສອກປາຍທັງແຫລ້
ອັນວ່າບາຄານທ້າວ
ປະສົງຣຽມຣຽມຣິດ ດີແລ້ວ

ຊື່ວ່າຄອງອັດມີ້

ປົວໄດ້ກໍຈິ່ງດີ ເຈົ້າເອີຍ

ອັນວ່າຄອງປະເສີດແທ້

ໃນໂລກປາງປະຖົມ

ບູຮານເຮົາ

ກ່າວມາມີອ້າງ

ຊື່ວ່າແມວຍິງມີ້

ເອົາຜົວເປັນໃຫຍ່

ອຸປຖາກໄດ້ຊູ່ມື້

ບຸນຄ້ຳຊ່ອຍຊູ ແທ້ແລ້ວ.

ນິທານທ້າວຄຳສອນ.

ຂອງກົມວັນນະຄະດີ

ສບັບ ປີ ໑໙໕໖.

## *ສາມຊາຍຫາຍິງແລະຍິງຕອບຊາຍ*

ໃນໜັງສື "ປຣະມວນກາບກອນຂອງພວກນັກປະພັນລາວ" ຣຽບຣຽງໂດຍ ລາວໃໝ່ ແລະພິມຈຳໜ່າຍທີ່ວຽງຈັນ ປີ ໑໙໔໗ ນັ້ນ ຂ້າພະເຈົ້າມີໂຊກໄດ້ອ່ານພໍ້ "ສາມຊາຍຫາຍິງ" ແລະ "ສາມຍິງຕອບຊາຍ" ຂອງ ໜູທັກ ສິທທິມໍລະດາ ຂ້າພະເຈົ້າຈຶ່ງໄດ້ຍອມເອົາມາຝາກໄວ້ທີ່ນີ້ເບັ້ນຂອງຂວັນແດ່ຜູ້ສົນໃຈ ໃນກະວີນິພົນລາວໃນຍຸກນີ້.



# ສາມຊາຍຫາຍິງ

ສາມນີ້ ຂຽນທີ່ເດຫັງຫ້ອງ

ຝາຕອງຕູບຕ່ຳ

ອັນທີ່ຄິດດັ່ງຂ້ອນ

ເດືອນຮ້ອນຮ່ອນຮົມ

ປີພີ່ພັນທະມັງນ້ອງ

ຍາມໃຈຈອມຈັກຂາດ

ດາວດ່າຄິດຮອດນ້ອງ

ທວງມ້າງເມື່ອຍມະໂນ

ຊື່ວ່າຊາຍຊະເລງ້ອງ

ເຫງົາທວງທົ່ມອັ້ງ

ຖາມຂ່າວແພງພະເນດໜ້າ

ນາງແກ້ວແກ່ນສເນ

(......)

ອ້າຍກໍຢູ່ບໍ່ໄດ້

ສົມໃຈເມື່ອຍເມົາຈິດ
ອັນດີມປຸ່ມເບັ່ນທຸມ
ທ່ອງເທທອງມ້າງ
ດາວເມື່ອກິນກິນເຂົ້າ
ກໍດາດໍແດ້ນດັ່ງ
ເໝືອນດັ່ງເຈັບປ່ວຍໄຂ້
ໃນເນື້ອໜ້ອງໜາ

ສະນັ້ນ ພີ່ຂໍຊາບສ່ອນນ້ອງ
ຈິດທະຈອດໃຈຮັກ
ຄຳນ້ອງຈາຈິ່ງໝາຍ
ເມື່ອສອງປະສົງຕ້ານ
ນ້ອງລົ້ນລົງລາຍມ້ອນ
ພຣະໄມຕຣີຕຣົງຕໍ່ກັນແລ້ວ
ພ້ອມພາຂັນຂອດໝັ້ນ
ໝາຍກ້ົວກ່ອມສເນ

(......)

ເຊີນເຍີ ! ເຊີນນ້ອງໄຂຂ່າວແຈ້ງ

ໂດຍພະເຈດໃຈຈິງ

ບິນບອກຄວາມຄໍາຄັກ

ຢ່າຂຽນບັງເບື້ອງ

ຄິດໄດ່ຫອມເຫັນອ້າຍ

ຜູ້ຊອມໃຈຈອນຈັກຂາດ

ນ້ອງບໍ່ຜາຍໂຜດລ້ຽງ

ຈັ່ງຊິມ້ອຍມອດຈິງ

ໜູທັກ ສິດທິມ່ລະດາ

ຫ້າມຈຳໜ່າຍ

# *ສາມຍິງຕອບຊາຍ*

ສາມນີ້ ຂຽນທີ່ເຮືອນເສົາເຊົ້າ
ຝາເພຝາກຫລົ່ມ
ອັນທີ່ຈື່ມຮອດອ້າຍ
ເດືອນໂອ້ອ່າວເຖິງ
ປີນ້ອງງົມງວາງ້ອງ
ຍາມຈົມຈອມຈັກຂ່ອງ
ດາວດ່າດອງຖ້າອ້າຍ
ລະເມີນ້ອຍເມື່ອຍມະໂນ
ຊື່ອ່າສາວສີສ້ອຍ
ຍິງພອຍດອງດູ່
ຕຣົງຕອບສາມສ່ວນອ້າຍ
ຊາຍຊອຍຊອບສະກົນ
(......)
ການທີ່ອ້າຍອ່າວເອີອ
ໂອມແອ່ວເອົາອອນ

ເປັນກຽດການກຸສົນ

ສ່ວນນາງເຫລືອລົ້ນ

ສຸດສິ່ງວອນວານນໍ

ເທພາພົມມະໂລກ

ໄດ້ດັ່ງຄວາມມັກແມ້ງ

ແສນຊຸ້ນສ່ວນບຸນ ອ້າຍເອີຍ.

(......)

ນ້ອງນີ້ ປຸນດັ່ງທຸມມະຊາດເຊື້ອ

ບານແບ່ງກາງບຶງ

ຖ້າທ່ພຸມມະລິເລາະ

ລ່ອງເຊີຍຊົມກ້ໍ

ບໍ່ທ່ອນຖອນຖອຍເວັ້ນ

ໝີເວວາງຈາກ ເປັ່ນແລ້ວ

ໄດ້ວ່າຫັມມະຊາດສ້າງ

ປະສົງຕັ້ງແຕ່ງປຸນ

ເອົາແຕ່ອ້າຍແກ່ນຕົ້ນ

ຊິນຳແອ່ວໂອນຂໍ ຈັ່ງແລ້ວ

ຍ່າໄດ້ເນີນມານເຫີງ

ຊິຈືດຈາງໃຈເວັ້ນ

ຜູ້ນ້ອງຄອງຄອຍຖ້າ

ຫລາຍອັນຊິອົ້ນອ້ອງ

ບຸນປຽບປາຂາດນ້ຳ

ຄອງຖ້າແຕ່ຫ່າຝົນ ອ້າຍເອີຍ.

ທບູທັກ ສິທທິມໍ່ຣະດາ.



## ຟັ່ງເຢີ! ຈັນທະຣັງເຫລື້ອມ

ໂອມໍ ຣາສີມາສົມກົ້ວ

ກຸມພຣະຈັນມົວມິດ ເສັຽແລ້ວ

ດັງດານ ເລີຍເລົ່າຊ້າ

ເບັ່ນຜ້າບຽດບັງ

ດຽວນີ້ ຈັນທະຣາດເສົ້າ

ເສັຽແສງສູນອ່ຳ ໄປແລ້ວ

ມັກຂັດຕຶກພ້ຳ

ມົວເສົ້າບໍ່ສ່ອງແສງ

ຣຽມຫາກ ແປງເຊີງໄອ້

ບໍ່ໂສດາດຳຊີກເກົ່າ

ຊາດທີ່ ແນວນາມເຊື້ອ

ຣາຊສີສັດໃຫຍ່

ບໍ່ຫ່ອນ ບິນສອດແສ້ວ

ໄປໄດ້ດັ່ງແຫລວ

ພົ້ງເຢີ ! ຈັນທະຣັງເຫລື້ອມ

ແພງສີສຸດທີ່ອ່າວ ຮຽມມົ້ນ

ຢ່າໄດ້ ລະແຮ້ງເຖົ້າ

ກາຮ້າຍຮ່ອມເຮ ແດ່ເນີ

ກາດຳວ່າ

ຢາກໝາຍເອົາແກ້ວ

ທັມມະໂຮງ

ມາຂອດພິລາມົ້ນ

ດຽວນີ້ ຕຳຕ່າເຂົ້າຍັງໄບ່ແລ້ວ

ປີເປົ້າຈັ່ງຊີເອົາ

ເຈົ້າຜູ່ ບົ່ມຍາສ້ຽມ

ຜຍາຕົມດ່ອຍຮ່ຳ ດູຖ້ອນ

ຖວາຍແກ່ ອົກຂມ່ອມພຸ້ມ

ພໍໃຫ້ຮ່ຳຄະນຶງ ແດ່ເນີ

ດວງມີ່ ຊື່ວ່າບັງຣະຫັດໄວ້

ພາຍໃນໃຫ້ຄິດຮ່ຳດູຖ້ອມ

ມັບແມບ ພໍໃຫ້ຮູ້

ປະຫຽມໄວ້ສະເດືອກເຫັນ.

ຈາກກອນ ລຶພສູນ

ຂອງ ເຈົ້າອະນຸວົງສ໌

## *ນິທານທ້າວກາລະເກດ*

ນິທານທ້າວກາລະເກດນີ້ ນັບວ່າເປັນວັນນະຄະດີລາວປະເພດຄຳກອນ ຊັ້ນເອກ ຂອງຊາດລາວໂດຍແທ້ແລະເປັນທີ່ນິຍົມຊົມຊອບຈາກປະຊາຊົນມາແລ້ວຫລາຍເຊັ່ນດົນ.

ເພື່ອນຮ່ວມຊາດຂອງຂ້າພະເຈົ້າ ບາງທ່ານອາດທ້ວງວ່າບໍ່ມີພົງສີໃດເທົ່າທຽມກັບງານອະມະຕະຂອງທ້າວປາງຄຳ ດີ ພົງສີສັງສິນໄຊ. ອາດເປັນຄວາມຈິງ ! ແຕ່ເຮົາຢ່າເພີ່ງໄປຍ້ອງແຕ່ຍອດກະວີເອກຄົນນັ້ນເລີຍ ເພາະວັນນະຄະດີລາວເປັນເໝືອນສວນດອກໄມ້ ທີ່ມີດອກໄມ້ຫລາຍຊະນິດດ້ວຍກັນ ແຕ່ລະຊະນິດກໍມີສີສັນ ກິ່ນຫອມ ທີ່ພາອອນຊອນພໍ່ ໆ ກັນ. ມັນຢູ່ນຳຜູ້ມັກ ! ຜູ້ມັກດອກຈຳປາກໍມີ ຜູ້ມັກດອກກຸຫລາບຫລືດອກອິນທະຫວາກໍມີ ມັນເປັນສິ່ງທີ່ປຽບໄດ້ຍາກເໝືອນດັ່ງ ຊຽງໃຕ້ ນັກຂຽນພົງສີ "ຫົວເຣືອງຕລົກຂອງທິດບົວ" (ສບັບອອກຈຳໜ່າຍ ປີ ໑໙໗໘) ສເນີໃຫ້ຜູ້ອ່ານເລືອກເອົາວ່າຜູ້ໃດໃຫຍ່ຍິ່ງກວ່າໃຜ ໃນລະຫວ່າງວິຣະກະສັດລາວອະມະຕະທັງສີ່ຄື :

"ເຈົ້າຟ້າງູ່ມງູ່

ໂຮມຊາດປະຊາລາວ

ໄຊຍ໌ເສດຖາ

ຜາບມານມາແຍ້ງ

ສຸຣິຍ໌ວົງສາສາງ

ເມືອງລາວເຮືອງຮຸ່ງ

ອະນຸວົງສ໌ບໍ່ຍອມເປັນຂີ້ຂ້າ

ພາກູ້ຊາດລາວ"

ແນ່ນອນທີ່ສຸດແຕ່ລະກະສັດລາວທັງສີ່ພຣະອົງນັ້ນ ເປັນຜູ້ຍິ່ງໃຫຍ່ພໍ ໆ ກັນໃນທັງຄຸນວຸທິຕ່າງ ໆ ຊຶ່ງອາດຜິດແຜກແຕກຕ່າງກັນໃນທ່ານອງດຽວກັນ ຂ້າພະເຈົ້າຍັງແນ່ໃຈວ່າຄົນລາວຜູ້ຮັກທັມ-ຊາດອັນສວຍສົດງົດງາມຂອງເມືອງລາວເຮົາ ຄົງຈະຕັດສິນໃຈໄວໂພດຫາກໄປຕັດສິນໃຈເດັດດ່ຽວໂລດວ່າ ທັມມະຊາດແຖວສາລາພູຄູນນັ້ນ ງາມກວ່າບ່ອນອື່ນ ໆ ໃນເມືອງລາວ ທີ່ຈິງແລ້ວທິວ

ທັດແລະບັນຍາກາດແຫ່ງເມືອງທົງສາ, ແຫ່ງພູພຽງບໍລະເວນ, ແຫ່ງປາກອູຖ້ຳຕິ່ງ, ແຫ່ງໜອງທົງແກ້ງກອກ, ແຫ່ງວັງວຽງ, ແຫ່ງຊຳທອງ, ແຫ່ງປາກກະດິງ, ແລະອີກຮ້ອຍ ໆ ແຫ່ງຂອງພຣະຣາຊອານາຈັກລາວອາດມີພລັງດູດດຶງນ້ຳຕາ ແຫ່ງຄວາມອອນຊອນຊາບຊຶ້ງຈາກທ່ານຜູ້ມັກຊົມນັ້ນໄດ້ ສຳລັບຂ້າພະເຈົ້າແລ້ວ, ທັນຊາດຍ່ານນ້ຳຕົກຫລີຜີ ບັນຍາກາດອັນສງົບງຽບແຫ່ງໝູ່ດອນຕ່າງ ໆ ຍ່ານດອນໂຂງ ເວລາຂີ່ເຮືອໄປຊ້າ ໆ ມັນຊ່າງເໝືອນດັ່ງສວັນນິມິດໄວ້ເຫລືອເກີນ ແຕ່ຫົວໃຈຂ້າພະເຈົ້າຍັງບໍ່ລືມຟ້ຳສີນ້ຳໝອກເມືອງທົງສາຊຶ່ງຕອນເຊົ້າເຮັດໃຫ້ໄຮ່ນາແລະພູຜາທີ່ແວດລ້ອມຢູ່ນັ້ນ ເໝືອນກັບຮູບແຕ້ມຊັ້ນເອກຂອງສິລປະກັມຈີນ.

ສນັ້ນ ເຮົາຍ່ອມພະຍາຍາມເລືອກຕັດສິນໃຈແຍກຄ່າໃນສິ່ງທີ່ບໍ່ຄວນແຍກ ແລະບໍ່ຄວນຕັດສິນໃຈ, ຈະເບັ່ນການດີກວ່າ–ເວົ້າອອກໄປນອກເຣື່ອງສົມຄວນແລ້ວ ເຮົາມາພາກັນອ່ານບັນມ່ວນ ໆ (ໃຈ) ຂອງໜັງສືກາລະເກດນຳກັນເທາະ !

*ຢອນອອກຈາກບັນທ້າວກາລະເກດ ໄປ ຫລັ້ນມາງມະລິຈັນ*

ທ້າວກາລະເກດອ້ອນວອນຂໍຄວາມຮັກແລະສັມພັນກາຍ :

ພີ່ນີ້ ເປັ້ນດັ່ງໄຊຫລັງຫລ້າ
ບໍ່ໝານປານຳເພີ່ນ ແລນໍ
ຖືກກໍໃສ່ໄວ້ບໍ່ຖືກກໍໃສ່ໄວ້
ຕາມຊ່າງກະບອນປາ ເທາະນໍ
ຄັນນ້ອງບໍ່ກູນາຜາຍ
ທ່ອນຈິເບືອງແຍງຮູ້
ພັນກໍໃຫ້ພັນທະມັງຜັ້ນ
ສເນຫາຮຽງຮ່ອມ ອອນເອີຍ
ລຸກໍໃຫ້ລຸໂຊກຖ້ອນ
ຍ່າໄດ້ລ່າຍພາງ
ຮັກກໍຫາກຮັກຮູບນ້ອງ
ຈິດທະຈອດຫົວອົກ

ລົງກໍໃຫ້ລົງລາຍດຽວ

ຍ່າເບືອນລັງດ້າວ

ສະກໍໃຫ້ສະສ່ອງແຈ້ງ

ເພັນຮ່ອມພຣະໄມຕີ ແດ່ຖ້ອນ

ພັນກໍໃຫ້ພັນທະນັງຕິດ

ພື່ນປີຍ່າໄລມ້າງ

ຂໍໃຫ້ນົງເຍົາເຍື່ອນ

ກະບວນສີໃສຮໍ່

ຍ່າໃຫ້ເຂີນຂາດແຫ້ງ

ຕົນທ້າງທີ່ຊິໄຫລ ແດ່ຖ້ອນ

ອັນນຶ່ງ ແປວທະເລກ້ວາງ

ໄຫລແຮງນ້ຳຖັ້ງ

ສັງເລົ້າກັ້ງດ້ວຍຜ້າ

ອາສາເຈົ້າຽຊິຂາດກາງ ພີ່ແລ້ວ

ພີ່ກໍໝາຍຊົມຊ້ອນ

ຊົມສອງສົມສູ່

ເບັ້ມດັ່ງຊາຍນິ່ງບ້ຳນ

ແປວນ້ຳແມ່ທະເລ

ພີ່ກໍປຸມປອງເບື້ອງ

ຄຳສເນໄສຮ໌ ອອນຖ້ອນ

ຂໍໃຫ້ອົກອຸ່ນເອື້ອ

ຄຳຂ້ອຍຂອດຈິງ ແດ່ຖ້ອນ

ພີ່ຫາກຈົມໃຈແຄ້ນ

ຄາທອງທົມສອາດ

ຄຶດຄັ່ງແຄ້ນ

ແສນແລ້ວພີ່ຊີລາ ກ່ອນແລ້ວ

ນາງມາລີຈັບກ່າວໄວ້ເຊີງຜູ້ຍິງວ່າ ຂໍໃຫ້ທ້າວຮີບເມືອເມືອງ

ໃຫ້ພຣະບາດເຈົ້າ

ແພງລ້ານຮ່ຳເພິງ ຫັ້ນຖ້ອນ

ຊາດທີ່ແນວກະສັດເຊື້ອ

ກະກຸນພູວະນາດ

ບໍ່ທ່ອນລັກຊ່ອນຊູ້

ຊາຍດັ່ມລອບປາງ ດັ່ງນີ້

ຜິດຮ່ອນເບື້ອງ

ໂດຍຮີດຄອງກະສັດ

ເບັ້ນຣາຊາ

ຊ່ຳໄກກຽມກ້ອງ

ຄອງກະສັດໃຫ້

ໂດຍຕາມຕ້ານກ່າວ ຈິ່ງແລ້ວ

ຂໍແກ່ພຣະແຜ່ນຫລ້າ

ຄະນິງແລ້ວດ່ວນເມືອ ພີ່ຖ້ອນ

ທ້າວກາລະເກດທຳທ່າວ່າຈະໃຫ້ເມືອກໍຈະເມືອ:

ພີ່ມີ ກາຍໂຍຜູ້
ໂທເລຜາງຮູບ
ຮຽມພໍ່ຮູອໄວ້
ອອນມ້ອງບໍ່ອິດູ
ຄ່ອຍຢູ່ດີເຢີ ! ທີພອິ່ມແກ້ວ
ງານເລີດອິນຂຽນ ພີ່ເອີຍ
ບໍ່ໃຊ່ຄອງບູຮານ
ຮ່ອມແມງຊີໄກພ້າ
ແມນບໍ່ລົງນຳກ້ຽວ
ແສນຊິອອນເທອະໂລກ ກໍດາຍແລ້ວ
ບຸນບໍ່ເຄີຍປະກອບແກ້ວ
ແສນຊິໄຫ້ບໍ່ໃຊ່ຫົວ ແລະນໍ່

ນາງມາລີຈັບເຫັນທ້າວຈະຈາກໄປອື້ຫລີຊ້າພະໜ່ງວໄວ້

ພຣະບາດເຈົ້າ

ລາມ້ອງດ່ອນເມືອ ແທ້ລື ?

ຍັງອ່າເບັ້ມກະສັດເຊື້ອ

ແມວນາມພູອະເມດ

ໄດ້ອ່າຜາຍແຜ່ນລ້ານ

ມາແລ້ວຊິດ່ອນເມືອ ແທ້ນໍ

ມາບໍ່ອຳອາຍໜ້າ

ຝູງຍິ່ງໃຍຮ່ຳ ອອນເອີຍ

ເອົາຈັກຕ້ານກ່າວຖ້ອຍ

ຂອັນເຮື້ອງຮ່ຮຽງ ແທ້ແລ້ວ



ທ້າວກາລະເກດທຳທ່າລາໄປອີ້ຫລີ

ອັນວ່າເກສາສ້ອຍ

ສຸຣະພີ ເຈົ້າມີແພງເອີຍ

ເຈົ້າຫາກຕັດຂາດຂ້ອນ

ເສັ້ຽເບື້ອງຮ່ອມຮຽງ ພີ່ແລ້ວ

ແໝງສູ້ໄລລາໄວ້

ເດີນດົງດັ້ນແອ່ວ ແພງເອີຍ

ຫລອນວ່າບຸນປະກອບໄດ້

ນາງເໝົ້າຮ່ອມຮຽງ ບໍ່ຮູ້

ພີ່ຫາກມາໝ່ຽວມ້ອງ

ມົງມາດມະລິຈັນ

ພັນທະມັງຂໍ

ໝ່ຽວເອົາດາຍດູ້

ກໍບໍ່ກູມາສູ້

ທົ້ມຍາມເຍື້ອນໂຜດ ອອນເອີຍ

ພີ່ຫາກທຸກທີ່ຟ້າ

ນ່ຳນ້ອງບໍ່ອິດູ ພີ່ແລ້ວ

ແໜງສູ້ໂຫເລກົ້ມ

ຕອມໃຈດົ້ມດ່ອມ ໝີເຖິ້ມ

ຈັກຢູ່ໄດ້

ອາຍໜ້າທ່ານຫຍັມ

ແມ່ນຈັກຕອມຕາຕ້ານ

ແນວໃດແຂວນໜ່ຽວ ກໍດາຍແລ້ວ

ປຽວວ່າອິນຢູ່ຟ້າ

ຊິລົງຍູ້ຊ່ອຍຊູ ບໍ່ຮູ້

ທ້າວກາລະເກດລຸກຂຶ້ນວ່າຈະຍ່າງອອກຈາກຫ້ອງນາງໄປນາງມະລິຈັນຊ້ຳພະສວາຍຜ້າຕ່ງວທ້າວໄວ້  ບໍ່ທັນໃຫ້ໄປເທື່ອ. ທ້າວກາລະເກດເລີຍກ່າວະ

ຂໍແກ່ນ້ອງແກ່ນແກ້ວ

ຢ່າຫ້າມພໍ່ຽວອອນ  ພີ່ຖ້ອນ

ອັນນຶ່ງ  ນ້ອງຫາກເພດຳນ້າງ

ມີແພງຮັກຮ່ອນ  ອອນແລ້ວ

ຢ່າໄດ້ຈັບແຈ່ງຜ້າ

ອອນໄວ້ຊິຂາດເຊີງ  ພີ່ແລ້ວ



ນາງມະລິຈັບກ່າວກ້ຽວທ້າວ

ຍັງວ່າເບັ່ນແມວເຊືອ

ກະສັດຕາເຊັງໂລກ

ໄດ້ວ່າເຂົ້າຮ່ອມມ້ອງ

ຊິພີພ້າບໍ່ອາຍເພີ່ມລີ

ອໍແກ່ພຣະບາດເຈົ້າ

ຕົນປະເສີດຣາຊາ

ຜາຍຍາມທີບ

ສ່ອງທອນເຫັນຜຽນ

ຍ່າໄດ້ໄລລາມ້ອງ

ວາງເວນຮ້າງເປົ່າ

ມ້ອງນີ້ເບັ່ນດັ່ງປາຢູ່ດ້າງ

ດອງແຫ້ງງ່ອງຝົນນີ້ແລ້ວ

ອັນວ່າ ຈອມກະສັດເຈົ້າ

ບຸນຄາມມາໂຜດນ້ອງນີ້

ເໝືອນດັ່ງ ຝົນທ່າແກ້ວ

ລະງົມກຸ້ມຫລັ່ງຮ່ຳ ແລເດ !

ພາກນຶ່ງເປັ່ນດັ່ງລົມພານຕ້ອງ

ໄພພະນອນໃສສ່ອງ ອອນເອີຍ

ຄັນວ່າລົມບໍ່ຕ້ອງ

ສູນເສົ້າຫລ່າເຫລືອງ

ໃຫ້ພີ່ປານິນ້ອງ

ຢ່າເບືອນຜິດຄິກ ອອນເອີຍ

ໃຫ້ພີ່ເຍື໊ອນໂຜດນ້ອງ

ພໍໃຫ້ສວ່າງເຫງົາ ແດ່ແມ.



ທ້າວກາລະເກດຕອບວ່າ:

ໂອນໍ ສົມສງຽມໜ້າ

ກັລຍາຊູ້ມີ ແໝງເອີຍ

ເຈົ້າຫາກ ຕັດຂາດເບື້ອງ

ຄຳຂ້ອຍໜ່ຽວອອນ ແທ້ແລ້ວ



ມາຮອດຕອນນີ້ທ້າວແລະນາງກໍຈູບຊົມດົມແກ້ມກັນແລະເສບໂສມກັນດ້ວຍຄວາມມັກແລະຮັກອັນຍິ່ງໃຫຍ່ ແລະເລິກຊຶ້ງດັ້ງມັກປະພັນລາວບູຮານເລົ້າໄວ້ດັ້ງຕໍ່ໄປນີ້ :

ພໍເມື່ອທ້າວກ່າວແລ້ວ

ຫຍັບແທບນາງດາມ

ມືຊອນຄໍ

ຈູບຊົມນາງນ້ອຍ

ນັບແຕ່ສອງເຝືອຜົ້ນ

ພັນທະນັງກົ້ງກ່ອມ

ໜ້າກ່າຍໜ້າ

ປົ່ນປ້ອນປ່ຽນສະລາ

ນັບແຕ່ເປັ້ນຍິງສ້າງ

ສົງສາມນ້າວສົ່ງ ອວນເອີຍ

ສິບຫ້າຂອບເຂົ້າ

ປີນີ້ໄປ່ເດີຍ ພໍເອີຍ

ບາກໍ່ເຝືອແຝງຊ້ອນ

ຊົມນາງກົ້ອກົ່ມ

ບາກໍ່ຊັກແທບໃກ້

ທອງໄທ້ຊອບພຣະໄທ

ກໍ່ບໍ່ໄລລາໄວ້

ພໍ່ຍາມຕາອຍິບນິ້ງ ແທ້ແລ້ວ

ມືມອດມ້າວ

ມົງມ້ອງແທບທອງ

ແລ້ວເລົ່າຍວງດຳຕ້ານ

ເກີຍກອມໄຂຕ່

ໜ້າຕໍ່ໜ້າ

ແຍງແລ້ວເບິ່ງເລິງ.

## ບັ້ນທ້າວກາລະເກດຄຶດອ່າວ

ເຖິງນາງມະລີຈັບເວລາຫ່າງກັນ.

ໂອນໍ ! ປານນີ້ນົງພາວຜັຽງ

ດະນິງເຖິງຫາພີ່ ບໍ່ເດ

ລືບໍ່ຄຶດຄັ້ງຂ້

ສນອງຄ້າຄ່ອງຄຳພີ່ເດ

ໂອນໍ ! ກັມໃດໂອ້

ອົກກະສັມແສນໂສກ

ຍົດທະໂຍກຜູ້

ກີລ້ານຫງ່ອນເຫງົາ ແຫ້ດາຍ

ໂອນໍ ! ວິບາກເບື້ອງ

ປາງກ່ອນກອນຖແລງ ແລນໍ

ໂຫເລພັດ

ພາກກັນໄກຟ້າ

ໂອນໍ ! ກັນໃດຂ້ອງ

ວຽນໄກຈໍາພາກກັນນໍ

ກໍຫາກລົງແຕ່ຟ້າ

ມາພ້ອມຮ່ອມເພົາ

ໂອນໍ ! ພີ່ທ່ອງນ້ອງ

ກັ້ນເກື້ອນໂຫເລຈິດ

ເໝືອນດັ່ງກິນຄົມເພັດ

ບໍ່ລົງເພມ້າງ

ໂອນໍ ! ກັນໃດເດ

ເລົ້າມາພອຍຂ້າງ

ອັນແຕ່ມົງນາງນ້ອງ

ແຍງເງົາປຸນປຽບກັນແລ້ວ

ພີ່ກໍມີຮາດຮ້າງ

ຮາມແກ້ວດັ້ງດຽວນີ້ແລ້ວ

ຄິດຮ່ໄຫ້ອໍ່ຮະເນດ

ພາຍພຮະອອນ ບໍ່ຮູ້

ກໍບໍ່ປຸນປານຜາງ

ຜອກແຕມໃດບ້າງ

ອັນນີ້ ຮ້ອຍວ່າເວນຫລັງຂ້ອງ

ອຽມທັນນໍາຕອບ ຈິງແລ້ວ

ກູຈັກດັບຊາດມ້ຽນ

ບໍ່ມິເວັ້ນເພື່ອນາງ ນີ້ແລ້ວ



# ເວົ້າເຖິງເຣື່ອງກະວິນິພົນ

ພລັງຄຳເວົ້າບາງຄຳ ມີອຳນາດຢ່າງໜ້າອັສຈັນ. ເມື່ອເອົາຄຳເວົ້າທີ່ມີພລັງດັ່ງກ່າວມາປະກອບກັນ ເຂົ້າເປັນອັກເປັນບົດຫລືເປັນປະໂຍກແລ້ວ ມັນອາດໃຫ້ຜູ້ມາພົບອ່ານໄດ້ຮັບຄວາມຊາບຊຶ້ງຕຶງໃຈ ບາງທີກໍອາດປຸກຫົວໃຈຜູ້ອ່ານໃຫ້ເບີກບານໄປດ້ວຍຄວາມຫວັງຫລືເສົ້າໂສກໄປດ້ວຍຄວາມຮູ້ສຶກສັງເວດ ຕໍ່ເຫດການທີ່ເກີດຂຶ້ນ.

ຄວາມຮູ້ສຶກຕ່າງ ໆ ທີ່ພລັງຄຳເວົ້າບາງຄຳຫລືໝູ່ຄຳເວົ້າບາງໝູ່ສາມາດໃຫ້ກຳເນີດຂຶ້ນໃນຫົວໃຈ ແລະຈິດສຳນຶກຂອງຜູ້ອ່ານນັ້ນແຫລະ ເພິ່ນເອີ້ນວ່າ ຄວາມຮູ້ສຶກແບບກະວິນິພົນ ດ້ວຍເຫດນີ້ບາງກາບກອນທີ່ຂຽນຂຶ້ນມາໄດ້ນັ້ນ ຈຶ່ງອາດບໍ່ເປັນກະວິນິພົນເລີຍ ແລະການທີ່ບຸກຄົນຜູ້ໃດຜູ້ນຶ່ງຮູ້ຈັກ ເອົາຄຳນັ້ນມາປະກອບກັບຄຳນີ້ເຂົ້າເປັນອັກເປັນບົດ ໂດຍຮູ້ຈັກໃຊ້ການສັມພັດຄຳໃນອັກຕ່າງ ໆຂອງກາບກອນ ຕາມຫລັກໄວຍາກອນນັ້ນ ບໍ່ໝາຍຄວາມວ່າບຸກຄົນ

ຜູ້ນັ້ນເປັນນັກກະວີເລີຍ. ເຂົາອາດພຽງແຕ່ເປັນ ຄົນຂຽນກອນ
ເປັນ ເທົ່ານັ້ນຍ້ອນວ່າຄຳເວົ້າທີ່ເຂົາໃຊ້ມາປະກອບການກອນເຂົາ
ນັ້ນເປັນຄຳເວົ້າທີ່ບໍ່ມີພລັງແຫ່ງກະວີນິພົນ.

ດ້ວຍເຫດນີ້ ກະວີເອກບາງທ່ານໃນປະເທດຕ່າງໆ ສໄມນີ້ຈຶ່ງບໍ່ໃຊ້ກອນເລີຍ ເຂົາພຽງແຕ່ປຸກຫົວໃຈຜູ້ອ່ານໂດຍຄຳເວົ້າທີ່ມີພລັງເທົ່ານັ້ນ. ນິນັກການເມືອງບາງທ່ານ ຖືວ່າກະວີນິພົນເປັນອາວຸດດີແລະໄດ້ໃຊ້ກະວີນິພົນ ປຸກຫົວໃຈເພື່ອນຮ່ວມຊາດຫລືພັກພວກຕົນໃຫ້ຂຶ້ນໃຈໃນອຸດົມຄະຕິແລະເປົ້າໝາຍຂອງຕົນ ດັ່ງຈະໄດ້ເຫັນກະວີນິພົນຂອງເຈົ້າອະນຸໃນສານ "ລືພສູນ" ຫລືໃນບົດກະວີນິພົນຕໍ່ໄປນີ້ ຂອງນັກຊາດນິຍົມຜູ້ນຶ່ງ:

"ເພື່ອລົບຮອຍນ້ຳຕາບົນໜ້າເຈົ້າອອກນັ້ນ ຕາຍພັນເທື່ອຂໍຍອມຕາຍ ໃຈຊື່ນບານ ຫາກວ່າມີຊີວິດໄດ້ອີກຊີວິດນຶ່ງ ເພື່ອນນິມິດຂໍນ້ອມມອບຊີວິດນັ້ນຮັບໃຊ້ອີກ ບໍ່ເສັຽດາຍ"

ການທີ່ຂ້າພະເຈົ້າໄດ້ໄປຊອກຕັດຍອນກາພກອນ ຈາກວັນນະຄະດີລາວມາແຜ່ຜາຍນະທີ່ນີ້ ໂດຍໃຫ້ຊື່ວ່າ "ໂອນໍ! ນ້ອງສາວເອີຍ" ອາດເປັ່ນປະໂຍດແດ່ອະນຸຊົນພາຍຊ້ອຍ ຫລືນັກສຶກສາວັນນະຄະດີລາວທີ່ຢາກຮຽນຮູ້ວິທີການກ້ຽວສາວ ຫລືຂຽນສານເຖິງຄົນຮັກແບບກະວີນິພົນບູຮານລາວ.

ຖ້າວ່າໜັງສືຜົລຣິບໂຮມສບັບນີ້ຂອງຂ້າພະເຈົ້າ ຫາກມີທັງປະໂຍດດັ່ງກ່າວ ແລະທັງໄດ້ກ່ອມອາຣົມທ່ານຜູ້ອ່ານໃຫ້ເບີກບານດ້ວຍແລ້ວ ຂ້າພະເຈົ້າຈະຖືວ່າຕົນໄດ້ບັນລຸເຖິງເປົ້າໝາຍຂອງຕົນຢ່າງບໍ່ຣະບອນ.

ຈົບ

ໂຜດຫາຊື້ອ່ານ :

# ຕ້ ຊຸນບໍ່ຂາດບໍ່ໃຫ້ຖຸງຂຽງ

ແລະ

# ປຣັຊຍາການເມືອງ

ຢ່າພາດ ! ດີແທ້ ໆ ! ເພື່ອປະກອບຄວາມຮູ້ດ້ານການເມືອງ !

ພິມທີ່ *ປາກປາສັກ* ການພິມ

9–11 ຖນົນຟ້າງຸ່ມ ວຽງຈັນ

[ ທາງແດນຂອງ ]

2262

ພ.ສ. 2515 ທັນວາ –1/1,500

☐ ດຣ. ສົມພະວັນ ອິນທະວົງສ໌ ☐



■ *ເກີດ:* ວັນທີ 27 ກຸມພາ 1936 ທີ່ບ້ານນາໄຊ ຕາແສງໜອງບອນ ເມືອງ ໄຊເສດຖາ ກຳແພງນະຄອນວຽງຈັນ

■ *ລູກຂອງ:* ສົມບູນ ອິນທະວົງສ໌ ພໍ່ຄ້າຮັບເໝົາກໍ່ສ້າງ ຈູ້ມເຈືອຢູ່ບ້ານ ສີຖານເໜືອ

■ *ແລະ:* ສາວຄຳເຮືອງ ສິງຫາຣາຊ (ຕາຍແລ້ວ) ຈູ້ມເຈືອ ພໍ່ຕູ້ມຸກ (ທິດສອນ) ບ້ານນາໄຊ ແລະບ້ານເພຍວັດ

■ *ມີລູກ:* ສີ່ຄົນ ຄື ຍິງນຶ່ງ ຊາຍສາມ

■ *ການສຶກສາ:* ໄດ້ຮັບປຣິນຍາເອກ ມາຫາວິທະຍາໄລ ເມືອງກເຣໂນບ ປະເທດຝຣັ່ງເສສ ປີ 1971 ໄດ້ຮັບ ປຣິນຍາໂທ ວິສະວະກອນ ມະຫາວິທຍາໄລ ເມືອງໂລຊານ ປະເທດສະວິດເຊີແລນ ປີ 1960 ໄດ້ຮັບບັກກາໂລເຣອາ ພາກສອງ ພແນກເລກ ທີ່ເມືອງປາຣີ ປີ 1954

■ *ເຄີຍໄດ້ແຕ່ງໜັງສື :*

"ຊຶມບໍ່ຂາດ ບໍ່ໃຫ້ຄຸງຂຽງ" ປີ 1972

"ປຣັຊຍາການເມືອງ" ປີ 1972